ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

18 - 24 ສິງຫາ 2023
ປີທີ 12
ສະບັບທີ 934
ລາຍສັປະດາ

## ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ສະມັດຊາລັດຖະສະພາແຫ່ງຊາດອາຊຽນ ໄອປາ ຄັ້ງທີ 44



(ສພຊ) ກອງປະຊຸມໃຫຍ່ໄອປາ ຄັ້ງທີ 44 ໄດ້ປິດລົງຢ່າງເປັນທາງການໃນວັນທີ 9 ສິງຫາ 2023 ຕະຫຼອດໄລຍະຂອງການດຳເນີນກອງປະຊຸມ ຄະນະຜູ້ແທນໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ບັນດາຮ່າງມະຕິທີ່ສະເໜີໃນກອງປະຊຸມຄະນະກຳມາທິການຕ່າງໆຂອງໄອປາ, ກອງປະຊຸມຄະນະສະມາຊິກລັດຖະສະພາເພດຍິງ, ກອງປະຊຸມສະມາຊິກລັດຖະສະພາໜຸ່ມ, ກອງປະຊຸມວຽກງານການເມືອງ, ກຳມາທິການວຽກງານເສດຖະກິດ, ກຳມາທິການວຽກງານສັງຄົມ ແລະ ກຳມາທິການວຽກງານພາຍໃນຂອງໄອປາ ແລະ ໄດ້ຮັບຮອງເອົາ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ



ສືບຕໍ່ຍົກສູງຂີດຄວາມສາມາດ... (ໜ້າ 3)




ຄະນະຜູ້ແທນ... (ໜ້າ 4)

ເຍົ່າໄວ້ ໄດ້ຂີດຂຽນ
❖ ວິເສດ ສະແຫວງສຶກສາ

ໄອຊີທີ (ICT) ໃຊ້ຄືໃຊ້ເປັນຈິ່ງເຫັນຄຸນຄ່າ (ໜ້າ 8)

## ປະທານກຳມາທິການການຕ່າງປະເທດ ພັກຊ້າຍເຢຍລະມັນ ເຂົ້າຢ້ຽມຂ່ຳນັບທ່ານຮອງປະທານສະພາແຫ່ງຊາດ



(ສພຊ) ວັນທີ 15 ສິງຫາ2023ທີ່ຫໍສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ວູບ ເກລເລີດທ໌ (Wulf Gallert) ປະທານກຳມາທິການຕ່າງປະເທດພັກຊ້າຍເຢຍລະມັນ ພ້ອມດ້ວຍຄະນະໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງວັນທີ 14-19 ສິງຫາ 2023.

ໃນໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບທ່ານ ວູບ ເກລເລີດທ໌ ພ້ອມດ້ວຍຄະນະ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ເຊິ່ງເປັນໂອກາດດີໃຫ້ແກ່ສອງຝ່າຍໄດ້ປຶກສາຫາລື, ແລກປ່ຽນບົດຮຽນກ່ຽວກັບການພົວພັນຮ່ວມມື ລະຫວ່າງ 2 ຝ່າຍ ໃນຕໍ່ໜ້າ ໂດຍ

ອ່ານຕໍ່ໜ້າ 3

## ປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ




(ສພຊ) ວັນທີ 11 ສິງຫາ 2023 ສະພາແຫ່ງຊາດໄດ້ມີພິທີປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ (15/08/1991-15/08/2023) ໂດຍການເປັນປະທານ ແລະ ປາຖະກະຖາຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ມີບັນດາທ່ານພະນັກງານອາວຸໂສບຳນານ, ຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການພາຍໃນສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ວັນລັດຖະທຳມະນູນແຫ່ງຊາດ ແມ່ນເຫດການປະຫວັດສາດສຳຄັນ, ເປັນການຢັ້ງຢືນຜົນງານອັນຍິ່ງໃຫຍ່ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເປັນການຢືນຢັນເຖິງເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຕໍ່ສາກົນ ທັງເປັນຂີດໝາຍໃນການຫັນປ່ຽນແນວທາງປ່ຽນແປງໃໝ່ມີຫຼັກການຂອງພັກ ເປັນກົດໝາຍພື້ນຖານຂອງລັດ ສປປ ລາວ ແລະ ຫັນໄປສູ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ສືບຕໍ່ສ້າງ ແລະ ປັບປຸງລະບອບປະ

ອ່ານຕໍ່ໜ້າ 3

## ທວນຄືນມູນເຊື້ອ 23 ສິງຫາ ມະຫາໄຊ

(ເນື່ອງໃນໂອກາດວັນຍຶດອຳນາດ 23 ສິງຫາ
23/08/1945, 23/08/1975-23/08/2023)

ໃນຂະບວນການຕໍ່ສູ້ກູ້ຊາດຕ້ານການຮຸກຮານຂອງພວກຈັກກະພັດ ໄດ້ມີຫຼາຍເຫດການສຳຄັນເກີດຂຶ້ນທີ່ ປະຊາຊົນລາວບໍ່ສາມາດຫຼົງລືມໄດ້ ໜຶ່ງໃນນັ້ນແມ່ນເຫດການວັນຍຶດອຳນາດ 23 ສິງຫາ 1945 ແລະ ວັນທີ 23 ສິງຫາ 1975 ແມ່ນໄຊຊະນະຄັ້ງສຸດທ້າຍແຫ່ງການຕໍ່ສູ້ປົດປ່ອຍຊາດອອກຈາກແອກປົກຄອງຂອງພວກສັກດີນາ ແລະ ຈັກກະພັດລ່າເມືອງຂຶ້ນຢ່າງສິ້ນເຊີງ. ດັ່ງນັ້ນ, ໃນໂອກາດຄົບຮອບ 78 ປີ ແລະ 48 ປີ ວັນຍຶດອຳນາດທົ່ວປະເທດ ຜູ້ຂຽນໄດ້ສັງລວມເຫດການສຳຄັນສອງວັນປະຫວັດສາດທີ່ມີຄວາມໝາຍ ເຊິ່ງ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ບໍລິສັດເອັມຊີເອສ ມາຍນິ້ງອິນດັສທຣີລາວ ຈຳກັດ



(ສພຊ) ວັນທີ 9 ສິງຫາ ທີ່ຜ່ານມາ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສົມທົບກັບສະພາປະຊາຊົນແຂວງຄຳມ່ວນ ໂດຍແມ່ນທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະຕິດຕາມ ໄດ້ເຄື່ອນໄຫວຢ້ຽມຢາມບໍລິສັດ ເອັມຊີເອສ ມາຍນິ້ງອິນດັສທຣີລາວ ຈຳກັດ ຢູ່ບ້ານພິນ, ເມືອງທ່າແຂກ ແຂວງຄຳມ່ວນ.

ໃນໂອກາດນີ້, ໄດ້ຮັບການຕ້ອນຮັບຈາກທ່ານ ປາດຖະໜາ ພູມສະຫວັນ ຮອງປະທານບໍລິສັດ ເອັມຊີເອສ ມາຍນິ້ງອິນດັສທຣີລາວ ຈຳກັດ ພ້ອມ

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມງານສັບປະດາອາຊຽນ-ຈີນ



(ສພຊ) ໃນລະຫວ່າງວັນທີ 4-9 ສິງຫາ 2023 ສະຫາຍ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາລາວ-ຈີນ ພ້ອມດ້ວຍຄະນະ ໄດ້ເດີນທາງໄປເຂົ້າຮ່ວມງານສັບປະດາອາຊຽນ-ຈີນ ປະຈຳປີ 2023 (ASEAN-china

ອ່ານຕໍ່ໜ້າ 2

**ຊົມເຊີຍ ວັນຍຶດອຳນາດ 23 ສິງຫາ 1975 - 23 ສິງຫາ 2023 ຄົບຮອບ 48 ປີ ຢ່າງສຸດໃຈ!**

## ສຳເລັດການ...

(ຕໍ່ຈາກໜ້າ 1)



ມະຕິທັງໝົດ ຈຳນວນ 30 ສະບັບ ທີ່ປິ່ນອ້ອມຫົວຂໍ້ຂອງກອງປະຊຸມດັ່ງກ່າວ ເຊິ່ງເປັນສະໜັບສະໜູນ ແລະ ສົ່ງເສີມຂະບວນການສ້າງປະຊາຄົມອາຊຽນໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະການເພີ່ມທະວີການປົກປັກຮັກສາສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບຂອງພາກພື້ນ, ສົ່ງເສີມການແກ້ໄຂບັນຫາຂໍ້ຂັດແຍ້ງດ້ວຍການເຈລະຈາ ແລະ ສັນຕິວິທີ ຫັນເສດຖະກິດເປັນດີຈີຕອນ, ສົ່ງເສີມການພັດທະນາວິທະຍາສາດ-ເຕັກໂນໂລຊີ ແລະ ການນຳໃຊ້ນະວັດຕະກຳ ເພື່ອການຂະຫຍາຍຕົວແບບຍືນຍົງ; ສົ່ງເສີມການນຳໃຊ້ພະລັງງານສະອາດ ແລະ ການກ້າວໄປເຖິງການຂະຫຍາຍຕົວທາງດ້ານເສດຖະກິດແບບສີຂຽວ; ສົ່ງເສີມການສ້າງອາຊີບ ເພື່ອແກ້ໄຂບັນຫາໄພຫວ່າງງານ, ສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ, ບົດບາດຍິງ-ຊາຍ, ຮັດແຄບຄວາມແຕກໂຕນຂອງການພັດທະນາລະຫວ່າງປະເທດສະມາຊິກອາຊຽນ ແລະ ເພີ່ມທະວີການເຊື່ອມໂຍງເຊື່ອມຈອດທາງດ້ານເສດຖະກິດ ແລະ ພື້ນຖານໂຄງລ່າງ ພາຍໃນອາຊຽນໃຫ້ຫຼາຍຂຶ້ນ. ພ້ອມດຽວກັນນັ້ນ, ກອງປະຊຸມຍັງເຫັນດີຮັບເອົາລັດຖະສະພາ ກູບາ, ຕວັກກີ ແລະ ອາມີເນຍ ເຂົ້າເປັນປະເທດສັງເກດການໃໝ່ຂອງໄອປາ ລວມທັງໝົດ 23 ປະເທດ.

ພ້ອມກັນນັ້ນ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ຂຶ້ນກ່າວຄຳເຫັນໃນການຮັບໜ້າທີ່ເປັນປະທານກອງປະຊຸມໃນປີ 2024 ທີ່ ສປປ ລາວ ເຊິ່ງທ່ານໄດ້ສະແດງຄວາມພ້ອມ ແລະ ຍິນດີຮັບເອົາການເປັນປະທານໄອປາ ຕໍ່ຈາກອິນໂດເນເຊຍ ແລະ ໄດ້ໃຫ້ຄຳໝັ້ນໝາຍວ່າຈະເຮັດທຸກຄວາມສາມາດຂອງຕົນ ເພື່ອປະຕິບັດໜ້າທີ່ເປັນປະທານໄອປາ ໃຫ້ມີຜົນສຳເລັດຢ່າງຈົບງາມ ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການສະໜັບສະໜູນ ແລະ ການຮ່ວມມືຢ່າງແໜ້ນແຟ້ນ ຈາກບັນດາລັດຖະສະພາສະມາຊິກໄອປາ, ກອງເລຂາໄອປາ, ກອງເລຂາອາຊຽນ, ບັນດາປະເທດສັງເກດການ ແລະ ບັນດາຄູ່ຮ່ວມພັດທະນາຕ່າງໆເປັນຢ່າງດີ

ຫຼັງຈາກນັ້ນ, ພະນະທ່ານ ນາງ ປວນ ມະຫາຣານີ ປະທານສະພາຜູ້ແທນລາສະດອນ ແຫ່ງ ສ. ອິນໂດເນເຊຍ, ປະທານກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ໄອປາ ຄັ້ງທີ 44 ໄດ້ກ່າວຄຳເຫັນປິດກອງປະຊຸມ ແລະ ໄດ້ກ່າວມອບການເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ໃຫ້ແກ່ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍການມອບທຸງໄອປາ ແລະ ຄ້ອນຕີ ໃຫ້ແກ່ປະທານໄອປາຄົນຕໍ່ໄປ.

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

Week 2023) ທີ່ນະຄອນຟູໂຈ ແຂວງຟູຈ້ຽນ ສປ ຈີນ ເພື່ອເປັນການປະກອບສ່ວນໃນການຊຸກຍູ້ການພົວພັນລະຫວ່າງອາຊຽນ ແລະ ຈີນ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ແລະ ເປັນການເສີມຂະຫຍາຍສາຍພົວພັນມິດຕະພາບລະຫວ່າງລາວ-ຈີນ ໃຫ້ໝັ້ນຄົງຍາວນານ ທັງເປັນໂອກາດໃນການປຶກສາຫາລືຂອດການຄ້າການລົງທຶນລະຫວ່າງຈີນ ແລະ ອາຊຽນ, ເປັນການເຜີຍແຜ່ນະໂຍບາຍທາງດ້ານການຄ້າ, ການລົງທຶນຂອງ ສປປ ລາວ ເພື່ອດຶງດູດນັກລົງທຶນຈາກ ສປ ຈີນ ໃຫ້ເຂົ້າມາລົງທຶນຢູ່ ສປປ ລາວ ໃຫ້ຫຼາຍຂຶ້ນ.

ການເຂົ້າຮ່ວມງານສັບປະດາອາຊຽນ-ຈີນ ປະຈຳປີ 2023ແມ່ນປະຕິບັດຕາມການເຊື້ອເຊີນຂອງສະຫາຍ Shi Zhonjung ເລຂາທິການໃຫຍ່ສູນອາຊຽນ-ຈີນ, ເນື່ອງໃນໂອກາດສະເຫຼີມສະຫຼອງວັນ ຄົບຮອບ 20 ປີ ທີ່ ສປ ຈີນ ໄດ້ລົງນາມໃນສົນທິສັນຍາວ່າດ້ວຍການຮ່ວມມືໃນເຂດອາຊີຕາເວັນອອກສຽງໃຕ້ ແລະ ຄົບຮອບ 20 ປີ ແຫ່ງການຮ່ວມມືດ້ານຍຸດທະສາດອາຊຽນ-ຈີນ ແລະ ຍັງໄດ້ກຳນົດໃຫ້ເປັນປີແຫ່ງການຮ່ວມມືທາງດ້ານກະສິກຳ ແລະ ຄວາມໝັ້ນຄົງອາຊຽນ-ຈີນ.

ໂອກາດດັ່ງກ່າວ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ຍັງໄດ້ພົບປະກັບສະຫາຍ Zhou Zu Yi ເລຂາຄະນະພັກແຂວງ, ຫົວໜ້າຄະນະປະຈຳພັກສະພາປະຊາຊົນແຂວງຟູຈ້ຽນ, ສະຫາຍ Shi Zhon-jung ເລຂາທິການໃຫຍ່ສູນອາຊຽນ-ຈີນ ແລະ ສະຫາຍ Cui Yonghui ກຳມະການພັກແຂວງຟູຈ້ຽນ, ເລຂາຄະນະພັກເມືອງເຊຍເມິນ; ພ້ອມດຽວກັນນັ້ນ, ສະຫາຍ ສົມມາດ ພົລເສນາ ຍັງໄດ້ເຂົ້າຮ່ວມມີຄຳເຫັນໃນພິທີເປີດງານສັບປະດາອາຊຽນ-ຈີນ ປະຈຳປີ 2023 ໂດຍສະຫາຍໄດ້ຍົກໃຫ້ເຫັນໝາກຜົນຂອງການຮ່ວມມືອາຊຽນ-ຈີນ ແລະ ການຮ່ວມມື ລາວ-ຈີນ ໂດຍສະເພາະຜົນສຳເລັດຂອງໂຄງການລົດໄຟລາວ-ຈີນ ແລະ ຜົນສຳເລັດດ້ານອື່ນໆ,ພ້ອມທັງໄດ້ເຂົ້າຮ່ວມກິດຈະກຳຕ່າງໆ ປິ່ນອ້ອມກອງປະຊຸມ ແລະ ເຄື່ອນໄຫວຢ້ຽມຊົມສະຖານທີ່ສຳຄັນຕ່າງໆພາຍໃນແຂວງຟູຈ້ຽນ ຈຳນວນໜຶ່ງ.

ການພົວພັນອາຊຽນ-ຈີນ ໄດ້ຮັບການພັດທະນາຢ່າງແຂງແຮງແລະໄດ້ຮັບການເສີມຂະຫຍາຍເປັນກ້າວໆມາ ໂດຍສະເພາະໃນຂົງເຂດການຄ້າ, ການລົງທຶນ, ການສຶກສາ, ວັດທະນະທຳ-ສັງຄົມ ແລະ ການທ່ອງທ່ຽວ ເຊິ່ງໄດ້ກາຍເປັນພື້ນຖານໃຫ້ແກ່ການເພີ່ມທະວີການຮ່ວມມື, ຄວາມເຂົ້າອົກເຂົ້າໃຈເຊິ່ງກັນແລະກັນ ບົນພື້ນຖານຕາມທິດ 4 ດີ, ສິ່ງດັ່ງກ່າວນັ້ນບໍ່ສະເພາະແຕ່ໄດ້ນຳຜົນປະໂຫຍດມາສູ່ອາຊຽນ ແລະ ສປ ຈີນ ເທົ່ານັ້ນ, ແຕ່ຍັງເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ໃນໂລກອີກດ້ວຍ, ນັບແຕ່ໄດ້ດຳເນີນນະໂຍບາຍເປີດປະຕູສູ່ພາຍນອກ ກໍຄືໃນຍຸກໂລກາພິວັດ ອາຊຽນ ແລະ ຈີນ ກໍໄດ້ເພີ່ມທະວີການຮ່ວມມືກັບສາກົນໃນຂອບຫຼາຍຝ່າຍ ທັງໃນລະດັບອະນຸພາກພື້ນ ແລະ ສາກົນຢ່າງຕັ້ງໜ້າ ໂດຍຍຶດໝັ້ນນະໂຍບາຍການຕ່າງປະເທດຂອງຕົນຢ່າງສະເໝີຕົ້ນສະເໝີປາຍ ເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງພາກພື້ນ ແລະ ໃນໂລກ ແນໃສ່ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການສ້າງສາພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ ກໍຄືປັບປຸງຄຸນນະພາບຊີວິດການເປັນຢູ່ຂອງປະ ຊາຊົນໃນບັນດາປະເທດອາຊຽນ ພ້ອມທັງໃຫ້ການສະໜັບສະໜູນທຸກຂໍ້ລິເລີ່ມການຮ່ວມມື ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍທີ່ເຫັນວ່າຈະນຳມາເຊິ່ງຜົນປະໂຫຍດຕໍ່ປະເທດຊາດ, ພາກພື້ນ ແລະ ສາກົນ ໂດຍລວມ.

ສຳລັບ ສປປ ລາວ ແລະ ສປ ຈີນ ໄດ້ມີການພົວພັນກັນນັບມື້ນັບເລິກເຊິ່ງຕາມ 4 ທິດດີ, ເພື່ອນທີ່ດີ, ສະຫາຍທີ່ດີ, ບ້ານໃກ້ເຮືອນຄຽງທີ່ດີ ແລະ ຄູ່ຮ່ວມມືທີ່ດີ, ມີການຮ່ວມມືຍຸດທະສາດຮອບດ້ານໝັ້ນຄົງຍາວນານ ແລະ ເປັນຄູ່ຮ່ວມສະຕາກຳມາໄດ້ຫຼາຍປີ ແລະ ພວມນຳຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ ບົນພື້ນຖານຄວາມເຫັນອົກເຫັນໃຈ ແລະ ໃຫ້ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນແລະກັນ ມາໂດຍຕະຫຼອດ, ມີການພົວພັນປະສານສົມທົບກັນຢ່າງສະໜິດແໜ້ນ, ມີການແລກປ່ຽນທັດສະນະຮ່ວມກັນຢ່າງເປັນປົກກະຕິ ແລະ ໄດ້ກຳນົດຈຸດສຸມການຮ່ວມມື ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນຮ່ວມມືໃຫ້ກ້າວເຂົ້າສູ່ລວງເລິກ ແລະ ລວງກວ້າງ ຕາມແຕ່ລະໄລຍະຢ່າງມີແບບແຜນ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

ດ້ວຍຄະນະ; ຈາກນັ້ນ, ໄດ້ຮັບຟັງການລາຍງານກ່ຽວກັບປະຫວັດຄວາມເປັນມາຂອງບໍລິສັດ ຄື: ບໍລິສັດ ເອັມຊີເອສ ມາຍນິ້ງ ອິນດັສທຣີລາວ ຈຳກັດ ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນກັນຍາ ປີ 2013 ພາຍໃຕ້ຊື່ MCS MINING INDUSTRY LAO CO.LTD, ເຊິ່ງເປັນບໍລິສັດຮ່ວມທຶນລະຫວ່າງພາຍໃນ ແລະ ຕ່າງປະເທດ (ປະເທດໄທ), ໃຊ້ງົບປະມານການລົງທຶນທັງໝົດ 50 ລ້ານໂດລາ ໃນເບື້ອງຕົ້ນບໍລິສັດໄດ້ມີການລົງທຶນພັດທະນາພື້ນຖານໂຄງລ່າງປະກອບມີອາຄານໂຮງງານ, ອາຄານສຳນັກງານ ແລະ ອາຄານທີ່ພັກອາໄສ ເນື້ອທີ່ 10 ເຮັກຕາ, ເຂດພື້ນທີ່ຂຸດຄົ້ນຫີນປູນໃນເນື້ອທີ່ 10 ເຮັກຕາ ແລະ ໄດ້ຮັບອະນຸຍາດເຂດພື້ນທີ່ຂຸດຄົ້ນຫີນປູນເພີ່ມເຕີມອີກໃນເນື້ອທີ່ 60 ເຮັກຕາ, ລວມເຂດພື້ນທີ່ຂຸດຄົ້ນທັງໝົດໃນປັດຈຸບັນ ແມ່ນມີເນື້ອທີ່ 70 ເຮັກຕາ, ໃນນັ້ນ, ລວມເນື້ອທີ່ເຂດສຳຫຼວດແລະສຳປະທານປະມານ 434 ເຮັກຕາ, ພາຍໃຕ້ສັນຍາວ່າດ້ວຍການລົງທຶນຂຸດຄົ້ນ ແລະ ປຸງແຕ່ງຫີນປູນ ລະຫວ່າງອົງການປົກຄອງແຂວງຄຳມ່ວນ ໃນນາມຄະນະກຳມະການ ແລະ ສົ່ງເສີມການລົງທຶນ ຫຼື ຄລທ ຕາງໜ້າໂດຍພະແນກແຜນການ ແລະ ການລົງທຶນ ແຂວງຄຳມ່ວນ ແລະ ບໍລິສັດ MCS MINING INDUSTRY LAO CO.LTD, ສະບັບລົງວັນທີ 15 ກໍລະກົດ 2015, ພາຍໃຕ້ອາຍຸສັນຍາສຳປະທານ 20 ປີ, ປັດຈຸບັນມີພະນັກງານທັງໝົດ 282 ຄົນ. ໃນນັ້ນມີແຮງງານລາວກວມເອົາ 90%, ມີຜະລິດຕະພັນ 3 ຊະນິດ ຄື: ແຄລຊຽມຄາຣໂບເນດ, ຫີນກໍ່ສ້າງ ແລະ ປູນຂາວ ຜະລິດຕະພັນຂອງໂຮງງານແມ່ນຜ່ານຂັ້ນຕອນການຜະລິດທີ່ມີຄວາມລະອຽດ ແລະ ມີຄຸນນະພາບສູງ ສາມາດຕອບສະໜອງໃຫ້ແກ່ພາກອຸດສາຫະກຳຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດຈຳນວນໜຶ່ງ ເປັນຕົ້ນແມ່ນເໝືອງທອງຄຳ, ເໝືອງທອງແດງ, ໂຮງງານຜະລິດເຈ້ຍ, ໂຮງງານຜະລິດນ້ຳຕານ, ໂຮງງານຜະລິດສີທຸກຊະນິດ, ໂຮງງານຜະລິດເຫຼັກ, ຜະລິດດິນບ່ອກຊະນິດເບົາ ແລະ ນຳໃຊ້ເຂົ້າໃນການບຳບັດນ້ຳເສຍໃນໂຮງງານອຸດສາຫະກຳ, ໃນພາກກະສິກຳປູກຝັງ-ລ້ຽງສັດ ໃຊ້ບຳບັດນ້ຳເນົ່າເສຍບໍ່ລ້ຽງປາ-ລ້ຽງກຸ້ງ, ບຳບັດດິນທີ່ບໍ່ສາມາດປູກພືດການກະເສດ ໃຫ້ກັບມາເພາະປູກໄດ້ເປັນຕົ້ນ. ພາຍຫຼັງທີ່ໄດ້ຮັບຟັງການລາຍງານ ຄະນະຕິດຕາມໄດ້ມີຄຳຖາມເຈາະຈີ້ມ ແລະ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ.

ໃນໂອກາດດຽວກັນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນເພື່ອໃຫ້ທິດຊີ້ນຳຕໍ່ບໍລິສັດດັ່ງກ່າວ ເຊິ່ງກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດບັນດາກິດຈະກຳຂອງບໍລິສັດ ແລະ ມີຄຳເຫັນເນັ້ນຕໍ່ບໍລິສັດ ໃຫ້ເອົາໃຈໃສ່ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ການສ້າງວຽກເຮັດງານທຳ, ການສ້າງບຸກຄະລາກອນສືບທອດ ແລະ ການປະກອບສ່ວນຂອງຜູ້ລົງທຶນ ເຂົ້າໃນການພັດທະນາທ້ອງຖິ່ນ ເປັນແນວທາງນະໂຍບາຍ ທັງເປັນວຽກງານທີ່ສຳຄັນຫລາຍ, ໂຄງການລົງທຶນໄດ້ຮັບຜົນສຳເລັດ, ທ້ອງຖິ່ນກໍໄດ້ຮັບການພັດທະນາ ເພື່ອແກ້ໄຂບັນຫາຮ້ອງຂໍຕໍ່ວ່າຂອງປະຊາຊົນທີ່ດຳລົງຊີວິດຢູ່ຂອບເຂດດັ່ງກ່າວ ທັງເປັນການສ້າງຄວາມກົມກຽວ ລະຫວ່າງ ຜູ້ລົງທຶນ ແລະ ປະຊາຊົນ.

**(ເອື້ອ ມະໂນສິງ)**

## ເລື່ອງເດັ່ນຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*❐ ອີງຕາມການລາຍງານຂອງອົງການພັດທະນາຊັບພະຍາກອນມະນຸດ ສາທາລະນະລັດ ເກົາຫຼີ ສູນອະນຸຍາດຈ້າງງານ (ESP) ປະຈຳ ສປປ ລາວ ໄດ້ແຈ້ງໃຫ້ຮູ້ວ່າ: ໃນປີ 2023 ທາງ ສ ເກົາຫຼີ ແມ່ນມີຄວາມຕ້ອງການແຮງງານລາວຈຳນວນ 2.000 ຄົນ ເຊິ່ງປະກອບມີ 2 ລະບົບ ຄື: ການໄປເຮັດວຽກຕາມລະດູການແມ່ນຈະເຮັດວຽກໃນຂະແໜງກະສິກຳ ແລະ ການປະມົງ ກຳນົດເວລາ 3-5 ເດືອນ ແລະ ການໄປເຮັດວຽກຢູ່ຂະແໜງອຸດສາຫະກຳ ແມ່ນເຮັດວຽກຢູ່ຫົວໜ່ວຍການຜະລິດຂະໜາດກາງແລະຂະໜາດນ້ອຍຫຼືລະບົບອະນຸຍາດການຈ້າງງານ (ESP) ມີກຳນົດເວລາ 3-5 ປີ.*

***ໜສພ. ປະເທດລາວ 11/08/2023***

## ປະທານກຳມາທິການ...

(ຕໍ່ຈາກໜ້າ 1)

ສະເພາະແມ່ນການສືບຕໍ່ໃຫ້ການຊ່ວຍເຫຼືອ ສປປ ລາວ ຂອງເຢຍລະມັນ ອັນເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບທີ່ມີມາແຕ່ດົນນານ ແລະ ການຮ່ວມມືທີ່ມີໝາກຜົນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສະຫະພັນເຢຍລະມັນ ເວົ້າລວມ, ເວົ້າສະເພາະ ລະຫວ່າງລັດຖະສະພາຂອງ 2 ປະເທດ ໃຫ້ໄດ້ຮັບການພັດທະນາແລະຂະຫຍາຍຕົວຍິ່ງໆຂຶ້ນ. ພ້ອມດຽວກັນນັ້ນ, ຍັງໄດ້ຕີລາຄາສູງຕໍ່ຜົນສຳເລັດຂອງການພົບປະເຮັດວຽກລະຫວ່າງກຳມາທິການການຕ່າງປະເທດ ພັກຊ້າຍເຢຍລະມັນກັບກຳມາທິການການຕ່າງປະເທດ ຂອງສະພາແຫ່ງຊາດລາວ ແລະ ຕາງໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຊົມເຊີຍສອງກຳມາທິການການຕ່າງປະເທດ ຂອງ ສະພາແຫ່ງຊາດລາວ ແລະ ພັກຊ້າຍເຢຍລະມັນ ຈະໄດ້ຮ່ວມກັນຈັດກອງປະຊຸມສຳມະນາເພື່ອແລກປ່ຽນຄຳຄິດຄຳເຫັນ ແລະ ບົດຮຽນໃນບັນດາຫົວຂໍ້ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ; ພ້ອມນັ້ນ, ທ່ານຍັງໄດ້ສະເໜີໃຫ້ສືບຕໍ່ແລກປ່ຽນຄະນະຜູ້ແທນໄປມາຫາສູ່ກັນ, ສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເຊິ່ງໃນປີ 2024 ສປປ ລາວ ຈະໄດ້ຮັບກຽດເປັນປະທານອາຊຽນ ແລະ ເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ, ສ່ວນສະພາແຫ່ງຊາດລາວ ກໍຈະເປັນປະທານໄອປາ ແລະ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບການສະໜັບສະໜູນຈາກເຢຍລະມັນ ເພື່ອເຮັດໃຫ້ ສປປ ລາວ ກໍຄືສະພາແຫ່ງຊາດລາວ ເຮັດຫຼ້ອນໜ້າທີ່ໃນການເປັນເຈົ້າພາບຄັ້ງນີ້.

ໂອກາດດັ່ງກ່າວ, ທ່ານ ອູບ ເກລເລີດທ໌ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມືຂອງສອງຝ່າຍໃນໄລຍະຜ່ານມາ ແລະ ເຫັນດີໃຫ້ມີການສືບຕໍ່ສ້າງສາຍພົວພັນອັນດີງາມຮ່ວມກັນໃນຕໍ່ໜ້າ ທັງດ້ານການພົວພັນລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ໃຫ້ນັບມື້ແໜ້ນແຟ້ນຍິ່ງໆຂຶ້ນ ທັງແຈ້ງຈຸດປະສົງຂອງການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ ກໍເພື່ອປະກອບສ່ວນເສີມຂະຫຍາຍການພົວພັນທີ່ດີງາມ ແລະ ການຮ່ວມມືລະຫວ່າງ ສອງປະເທດ ເຢຍລະມັນ-ລາວ ກໍຄືການພົວພັນຮ່ວມມື ລະຫວ່າງພັກຊ້າຍເຢຍລະມັນ ແລະ ສະພາແຫ່ງຊາດລາວ; ໃນນັ້ນ, ກໍແມ່ນມູນນິທິໂຣຊາລຸກຊຳບວກ ທີ່ໄດ້ໃຫ້ການສະໜັບສະໜູນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດລາວ. ພ້ອມນັ້ນ, ກໍເພື່ອພົບປະ ແລະ ເຮັດວຽກຮ່ວມກັບກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ແລະ ຍັງຈະໄດ້ຈັດສຳມະນາຮ່ວມລະຫວ່າງກຳມາທິການການຕ່າງປະເທດ ພັກຊ້າຍເຢຍລະມັນ ແລະ ກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ອີກດ້ວຍ.

ໃນວັນດຽວກັນ, ທີ່ຫໍສະພາແຫ່ງຊາດ ຍັງໄດ້ມີກອງປະຊຸມພົບປະ 2 ຝ່າຍລະຫວ່າງກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ແລະ ກຳມາທິການການຕ່າງປະເທດ ພັກຊ້າຍເຢຍລະມັນ ເຊິ່ງທັງສອງຝ່າຍໄດ້ແຈ້ງໃຫ້ກັນຊາບໂດຍຫຍໍ້ກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ອົງການນິຕິບັນຍັດໃຫ້ກັນແລະກັນຊາບ ທັງຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການຕິນິບັນຍັດ ແລະ ປຶກສາຫາລືຢ່າງກົງໄປກົງມາດ້ວຍຄວາມເປັນເອກະພາບກັນຕໍ່ການພົວພັນຮ່ວມມືໃນຕໍ່ໜ້າ.

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສະຫະພັນເຢຍລະມັນ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 31 ກັນຍາ 1958 ປະຈຸບັນແມ່ນ ຄົບຮອບ 65 ປີ. ຕະຫຼອດໄລຍະຜ່ານມາ, ສອງປະເທດໄດ້ເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ມີມາຢ່າງຍາວນານນັ້ນໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ; ເວົ້າສະເພາະ, ສະພາແຫ່ງຊາດລາວ ແລະ ລັດຖະສະພາສະຫະພັນເຢຍລະມັນ ໄດ້ມີການພົວພັນຮ່ວມມືນຳກັນຢ່າງເປັນປົກກະຕິ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມ ຂອງຄະນະຜູ້ແທນໄປມາຫາສູ່ກັນ, ມີການແລກປ່ຽນຂໍ້ມູນຂ່າວສານ, ສານຊົມເຊີຍ, ສານອວຍພອນໃນໂອກາດວັນສຳຄັນຕ່າງໆ ພ້ອມທັງສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນໃນກອບຄູ່ຮ່ວມເຈລະຈາລັດຖະສະພາອາຊີ-ເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ (IPU) ແລະ ອື່ນໆ. ພ້ອມກັນນີ້, ເຢຍລະມັນ ຍັງໄດ້ໃຫ້ການຊ່ວຍເຫຼືອ ແລະ ໃຫ້ການສະໜັບສະໜູນ ໃນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍຜ່ານໂຄງການການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (CEGGA); ໂດຍສະເພາະມູນນິທິໂຣຊາລຸກຊຳບວກ ໄດ້ເລີ່ມເຂົ້າມາເຮັດວຽກ ແລະ ສະໜັບສະໜູນສະພາແຫ່ງຊາດລາວ ຕັ້ງແຕ່ປີ 2011 ໄດ້ສະໜັບສະໜູນກຳມາທິການກົດໝາຍ ແລະ ກຳມາທິການບັນດາເຜົ່າ ພ້ອມນີ້, ກໍໄດ້ສະໜັບສະໜູນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ການໄປທັດສະນະແລກປ່ຽນບົດຮຽນ ທີ່ປະເທດເຢຍລະມັນ ເຊິ່ງເຫັນວ່າການຊ່ວຍເຫຼືອດັ່ງກ່າວ ແມ່ນມີປະສິທິພາບ ແລະ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສະພາແຫ່ງຊາດລາວ.

(ກຸກກີກ ບຸດດາໄຊ)

## ປາຖະກະຖາ...

(ຕໍ່ຈາກໜ້າ 1)

ຊາທິປະໄຕປະຊາຊົນ ຕາມທິດກ້າວຂຶ້ນສັງຄົມນິຍົມ ບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ; ເພື່ອເປັນການທວນຄືນ ແລະ ໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ຜົນການປະຕິບັດລັດຖະທຳມະນູນ ໃຫ້ແກ່ການນຳ ແລະ ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ.

ໃນພິທີ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ຍົກໃຫ້ເຫັນຄວາມໝາຍຄວາມສຳຄັນຂອງວັນລັດຖະທຳມະນູນແຫ່ງຊາດ ທັງໄດ້ເລົ່າເຫດການສຳຄັນ ແລະ ປະຫວັດຄວາມເປັນມາຂອງການສ້າງລັດຖະທຳມະນູນ ເຊິ່ງແມ່ນສະພາປະຊາຊົນສູງສຸດ ຊຸດທີ II ພາຍໃຕ້ການເປັນປະທານຂອງທ່ານ ໜູຮັກ ພູມສະຫວັນ ໄດ້ດຳເນີນການຮ່າງລັດຖະທຳມະນູນແຫ່ງຊາດ ສະບັບທຳອິດຂອງ ສປປ ລາວ ແລະ ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນສູງສຸດ ຊຸດທີ II ເມື່ອວັນທີ 14 ສິງຫາ 1991 ແລະ ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 55/ປທປທ, ລົງວັນທີ 15 ສິງຫາ 1991.

ໂອກາດດຽວກັນນີ້, ຍັງໄດ້ຮັບຟັງການປະກອບຄຳເຫັນ ແລະ ເລົ່າເຫດການສຳຄັນໃນການດຳເນີນການຮ່າງລັດຖະທຳມະນູນສະບັບທຳອິດ ຈາກພະນັກງານອາວຸໂສບຳນານ ທີ່ເປັນໜຶ່ງໃນຜູ້ຖືກແຕ່ງຕັ້ງໃນຄະນະຮ່າງລັດຖະທຳມະນູນສະບັບທຳອິດ ເພື່ອເປັນການຢ້ຳຄືນເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຫັນໄດ້ຜົນງານທີ່ຍິ່ງໃຫຍ່, ຄວາມໝາຍຄວາມສຳຄັນຂອງວັນດັ່ງກ່າວຕື່ມອີກ.

ໃນຕອນບ່າຍຂອງວັນດຽວກັນ, ຍັງໄດ້ມີຂະບວນການກິລາບານເຕະມິດຕະພາບ ເພື່ອສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ ແລະ ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທັງເພື່ອເປັນການຮັດແໜ້ນຄວາມສາມັກຄີຮັກແພງລະຫວ່າງຊາວໜຸ່ມສະພາແຫ່ງຊາດ, ຊາວໜຸ່ມໄອຍະການປະຊາຊົນສູງສຸດ, ຊາວໜຸ່ມຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ບໍລິສັດ ສິຣິໂຊກ ທີ່ປຶກສາການຄ້າ ແລະ ການລົງທຶນ ຈຳກັດ.

# ສືບຕໍ່ຍົກສູງຂີດຄວາມສາມາດດ້ານທັກສະ ໃຫ້ ສສນວ ແລະ ສສຂ



(ສພຊ) ໃນລະຫວ່າງວັນທີ 14-15 ສິງຫາ 2023 ທີ່ສະພາປະຊາຊົນແຂວງບໍລິຄຳໄຊ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ສືບຕໍ່ຈັດກອງປະຊຸມການຍົກສູງຂີດຄວາມສາມາດດ້ານທັກສະການຕິດຕາມກວດກາ, ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ, ການຊັກຖາມ ແລະ ການປະກອບຄຳເຫັນ, ການລົງພົບປະຜູ້ມີສິດເລືອກຕັ້ງ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ມີຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) 2 ແຂວງ ຄື: ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ; ນັກວິທະຍາກອນຮັບເຊີນຈາກສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ; ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນດ້ານງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ ແລະ ງົບປະມານຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ.

ທັງນີ້, ເພື່ອຍົກລະດັບຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງແນໃສ່ເຮັດໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິຜົນ ທັງເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບບາງທັກສະທີ່ມີຄວາມຈຳເປັນໃນການປະຕິບັດວຽກງານຕົວຈິງໃຫ້ມີຜົນສຳເລັດດີຂຶ້ນ, ເພື່ອແລກປ່ຽນ, ສົນທະນາກ່ຽວກັບບາງບົດຮຽນລະຫວ່າງວິທະຍາກອນ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການດ້ວຍກັນ ແນໃສ່ການຍົກລະດັບຄວາມຮັບຮູ້ ແລະ ຄວາມສາມາດໃນການປະຕິບັດໜ້າທີ່ການເມືອງໃຫ້ມີປະສິດທິຜົນດີຂຶ້ນ.

ກອງປະຊຸມ ໄດ້ຮັບຟັງການສະເໜີຫົວຂໍ້ກ່ຽວກັບທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ສະເໜີໂດຍທ່ານ ປອ. ສາຍທອງ ພົມມະວົງ ຫົວໜ້າກົມແຜນການ ແລະ ການລົງທຶນ ກຳມາທິການແຜນການ, ການເງິນ ແລະ ການກວດສອບສະພາແຫ່ງຊາດ; ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ທັກສະການຊັກຖາມ, ການປະກອບຄຳເຫັນ ສະເໜີໂດຍທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ການສະເໜີບົດກ່ຽວກັບທັກສະການພົບປະປະຊາຊົນ ຂອງສະມາຊິກສະພາປະຊາຊົນແຂວງ ສະເໜີໂດຍທ່ານ ນາງ ບົວວັນ ທຳມະວົງ ຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນກັບນັກວິທະຍາກອນຢ່າງກົງໄປກົງມາ.

ໃນພິທີ, ທ່ານ ສິນທະລາ ຫຼ້າສຸກສະໄໝ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ກ່າວວ່າ: ຄະນະປະຈຳສະພາແຫ່ງຊາດ ເວລາໃດກໍໄດ້ຖືເປັນສຳຄັນວຽກງານຍົກສູງຂີດຄວາມສາ ມາດໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວິຊາການ ທີ່ເປັນເສນາທິການໃຫ້ສະພາ ເຊິ່ງໄດ້ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມສ້າງແຜນການເຄື່ອນໄຫວໃນແຕ່ລະໄລຍະ ແລະ ອະນຸມັດໃຫ້ວຽກງານດັ່ງກ່າວໃຫ້ໄດ້ເຄື່ອນໄຫວຢ່າງຕໍ່ເນື່ອງ ເພື່ອຮັບປະກັນໃຫ້ການປະຕິບັດພາບົດບາດຂອງສະມາຊິກສະພາໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ແລະ ສ້າງຄວາມເຊື່ອໝັ້ນໄວ້ວາງໃຈຂອງປະຊາຊົນຕໍ່ສະມາຊິກສະພາພວກເຮົານັບມື້ສູງຂຶ້ນ; ກອງປະຊຸມຄັ້ງນີ້ກໍແມ່ນການສືບຕໍ່ຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ແລະ ແຜນການປະຈຳປີ 2023 ຂອງວຽກງານຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ດັ່ງນັ້ນ, ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຝຶກອົບຮົມຄັ້ງນີ້ ຈົ່ງພ້ອມກັນສຸມສະຕິປັນຍາ ແລະ ນຳໃຊ້ເວລາອັນມີຄຸນຄ່ານີ້ເຂົ້າໃນການຟັງ, ການສົນທະນາແລະແລກປ່ຽນບົດຮຽນນຳກັນໃຫ້ເລິກເຊິ່ງ, ສາມາດນຳເອົາບົດຮຽນໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການປະຕິບັດພາລະບົດບາດຂອງຕົນໃຫ້ດີຂຶ້ນ.

**(ສຸພາວັນ ທອມສະນິດ)**

## ທວນຄືນມູນເຊື້ອ...

(ຕໍ່ຈາກໜ້າ 1)

ເປັນມະຫາໄຊຊະນະອັນຍິ່ງໃຫຍ່ຂອງຊາດລາວເຮົາ ໃນການຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດຕ່າງດ້າວ ເພື່ອໃຫ້ທ່ານຜູ້ອ່ານ ໄດ້ທວນຄືນ ແລະ ລະນຶກເຖິງວັນປະຫວັດສາດອັນສຳຄັນຂອງຊາດລາວເຮົາ.

ໃນຕົ້ນສະຕະວັດທີ XX ຈັກກະພັດລ່າເມືອງຂຶ້ນແບບເກົ່າ ໄດ້ເຂົ້າມາໃນແຫຼມອິນດູຈີນ ແລະ ຍຶດເອົາປະເທດກຳປູເຈຍ, ຫວຽດນາມ ແລະ ລາວ ເປັນຫົວເມືອງຂຶ້ນ ເຮັດໃຫ້ປະຊາຊົນສາມຊາດອິນດູຈີນ ເວົ້າລວມ, ເວົ້າສະເພາະ ປະຊາຊົນລາວ ຖືກກົດຂີ່ຂູດຮີດ, ເປັນຂ້ອຍຂ້າຂອງພວກຈັກກະພັດລ່າເມືອງຂຶ້ນຕ່າງດ້າວ. ຍ້ອນນ້ຳໃຈຮັກຊາດ ຄຽດແຄ້ນຕໍ່ສັດຕູຜູ້ຮຸກຮານ ແລະ ທົນຕໍ່ການກົດຂີ່ຂູດຮີດຂອງພວກລ່າເມືອງຂຶ້ນບໍ່ໄຫວ ຈຶ່ງໄດ້ເກີດມີຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ເພື່ອຍາດເອົາເອກະລາດ, ເສລີພາບ ເປັນຕົ້ນແມ່ນຂະການຕໍ່ສູ້ຂອງປະຊາຊົນແຂວງສະຫວັນນະເຂດ ນຳພາໂດຍພໍ່ກະດວດ ໃນປີ 1901-1903; ຂະບວນການຕໍ່ສູ້ຂອງປະຊາຊົນພາກໃຕ້ ນຳພາໂດຍອົງແກ້ວ-ອົງກົມມະດຳ ໃນປີ 1901-1937; ຂະບວນການຕໍ່ສູ້ຂອງປະຊາຊົນບັນດາເຜົ່າພາກເໜືອ ນຳພາໂດຍເຈົ້າຟ້າປັດໄຈ ໃນປີ 1918-1922; ຂະບວນການຕໍ່ສູ້ຂອງນາຍຄູຄຳ ຢູ່ວຽງຈັນປີ 1920 ແລະ ຂະບວນການຕໍ່ສູ້ອື່ນໆ. ແຕ່ໜ້າເສຍດາຍບັນດາຂະບວນການຕໍ່ສູ້ເຫຼົ່ານັ້ນລ້ວນແຕ່ຖືກປະລາໄຊ ເນື່ອງຈາກບໍ່ມີພັກນຳພາ, ບໍ່ມີການວາງແຜນ ແລະ ບໍ່ມີອາວຸດທີ່ທັນສະໄໝ. ມາຮອດປີ 1934 ອົງຄະນະພັກແຄວ້ນລາວ ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອນຳພາຂະບວນການຕໍ່ສູ້ກູ້ຊາດ ຂອງປະຊາຊົນລາວບັນດາເຜົ່າ, ພາຍໃຕ້ການນຳພາຂອງພັກ ໄດ້ເຮັດໃຫ້ການປະຕິວັດຂອງປະຊາຊົນລາວ ກ້າວສູ່ຄຸນນະພາບໃໝ່ ໄດ້ຮັບໄຊຊະນະເປັນກ້າວໆ ແລະ ນຳໄປເຖິງການລຸກຮື້ຂຶ້ນຢຶດອຳນາດໃນທົ່ວປະເທດ ໃນວັນທີ 23 ສິງຫາ 1945.

ຂະບວນການຢຶດອຳນາດຢູ່ວຽງຈັນ ໄດ້ເລີ່ມຈາກການຕໍ່ສູ້ຂອງຊາວກຳມະກອນໂຮງງານກັບຟາ ຈຳນວນ 500 ຄົນ, ງານໂຮມຊຸມນຸມມິດຕິງ ໄດ້ມີຄົນເຂົ້າຮ່ວມໝື່ນກວ່າຄົນ. ພ້ອມນັ້ນ, ຢູ່ແຂວງສະຫວັນນະເຂດປະຊາຊົນ ກໍໄດ້ໂຄ່ນລົ້ມອຳນາດການປົກຄອງເກົ່າ, ສ້າງອຳນາດການປົກຄອງປະຕິວັດຂຶ້ນແທນ ໃນວັນທີ 30 ສິງຫາ ແລະ ຢູ່ທ່າແຂກ ວັນທີ 1 ກັນຍາ. ສ່ວນຢູ່ຊຳເໜືອ ໃນວັນທີ 26 ສິງຫາ ເຖິງເດືອນຕຸລາ ໄດ້ມີຂະບວນການບຸກໂຈມຕີກອງທະຫານຂອງພວກຮຸກຮານ ແລະ ໄດ້ຍຶດເອົາຕົວເມືອງຄືນໄດ້. ໃນໄລຍະບໍ່ເຖິງ 1 ເດືອນ ປະຊາຊົນລາວທີ່ໄດ້ຮັບການຮ່ວມມືປະສານສົມທົບຢ່າງຕັ້ງໜ້າຂອງອ້າຍນ້ອງຫວຽດນາມ ໄດ້ພ້ອມກັນລຸກຮື້ຂຶ້ນໂຄ່ນລົ້ມອຳນາດການປົກຄອງເກົ່າ ແລະ ສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນ ຢູ່ຫຼາຍທ້ອງຖິ່ນ ແລະ ໄດ້ຈັດຕັ້ງບັນດາກອງກຳລັງປະກອບອາວຸດປ້ອງກັນຕົວ ຢູ່ໃນຕົວເມືອງໃຫຍ່ຕ່າງໆເຊັ່ນ: ຢູ່ເມືອງວຽງຈັນ, ທ່າແຂກ, ສະຫວັນນະເຂດ, ຊຽງຂວາງ, ຊຳເໜືອ ແລະ ຫຼວງພະບາງ. ຫຼັງຈາກນັ້ນ, ກໍໄດ້ປະກາດສ້າງຕັ້ງລັດຖະບານລາວອິດສະຫຼະຂຶ້ນ ໃນວັນທີ 12 ຕຸລາ 1945.

ການລຸກຮື້ຂຶ້ນຍຶດອຳນາດ 23 ສິງຫາ 1945 ແລະ ການສ້າງຕັ້ງລັດຖະບານລາວອິດສະຫຼະ ແມ່ນເຫດການທາງດ້ານການເມືອງ ແລະ ກໍເປັນໄຊຊະນະຄັ້ງປະຫວັດສາດຂອງຊາດລາວ ປະຊາຊົນລາວບັນດາເຜົ່າ ໄດ້ພ້ອມພຽງຮຽງໜ້າກັນລຸກຮື້ຂຶ້ນຕໍ່ສູ້, ທັບມ້າງແອກປົກຄອງຂອງລັດທິລ່າເມືອງຂຶ້ນແບບເກົ່າ ທີ່ຄອບງຳປະເທດລາວມາເປັນເວລາດົນນານ ແລະ ເປັນການເປີດສາກໃຫ້ແກ່ການເຄື່ອນໄຫວປະຕິວັດລາວກ້າວໄປສູ່ໄລຍະໃໝ່. ການປະກາດເອກະລາດ ເປັນການເຕົ້າໂຮມແຜ່ນດິນລາວ ທັງເປັນການຫັນປ່ຽນລະບອບການປົກຄອງ ແລະ ລຶບລ້າງທຸກສັນຍາທີ່ລາວ ໄດ້ເຊັນກັບພວກຈັກກະພັດແບບເກົ່າກ່ອນໜ້ານັ້ນ, ປະກາດໃຊ້ທຳມະນູນສະບັບຊົ່ວຄາວ, ປະກາດໃຊ້ເພງຊາດ, ທຸງຊາດສາມສີ ແລະ ປະກາດແຕ່ງຕັ້ງ ຄະນະລັດຖະບານຊົ່ວຄາວຂຶ້ນ (ລັດຖະບານລາວອິດສະຫຼະ).

ຕົ້ນປີ 1946 ຈັກກະພັດລ່າເມືອງຂຶ້ນແບບເກົ່າ ກໍໄດ້ກັບມາຮຸກຮານປະເທດລາວ ເປັນຄັ້ງທີ 2, ພາຍຫຼັງພວກລ່າເມືອງຂຶ້ນແບບເກົ່າຖືກປະລາໄຊ ແລະ ຍອມຖອນກຳລັງອອກຈາກແຫຼມອິນດູຈີນ (ລາວ, ຫວຽດນາມ ແລະ ກຳປູເຈຍ), ຈັກກະພັດແບບໃໝ່ ກໍໂດດເຂົ້າມາແທນ ແລະ ສືບຕໍ່ມາຮຸກຮານປະເທດລາວ ໂດຍໃຊ້ກົນອຸບາຍນາງປະການ ເພື່ອຫວັງເອົາປະເທດລາວ ເປັນຫົວເມືອງຂຶ້ນແບບໃໝ່ ແລະ ຊື້ຈ້າງຈອບອອຍປະຊາຊົນ ໃຫ້ເປັນລູກແຫຼ່ງຕີນມື ຂອງພວກເຂົາ, ໃນວັນທີ 22 ມີນາ 1955 ພັກປະຊາຊົນລາວ ໄດ້ຮັບການສ້າງຕັ້ງຂຶ້ນ, ພັກໄດ້ນຳພາປວງຊົນລາວທັງຊາດ ລຸກຮື້ຂຶ້ນຕໍ່ສູ້ຕ້ານຈັກກະພັດຮຸກຮານ ເຊິ່ງເປັນການຕໍ່ສູ້ທີ່ດຸເດືອດ-ຂ້ຽວຂາດຫຍຸ້ງຍາກ ຂອງກຳລັງປະຕິວັດພວກເຮົາ. ຂະບວນການຕໍ່ສູ້ຕ້ານກັບຈັກກະພັດແບບໃໝ່ ໄດ້ແບ່ງອອກເປັນ 3 ໄລຍະຄື: ໄລຍະປີ 1954-1963 ເປັນໄລຍະການຕໍ່ສູ້ປົກປັກຮັກສາສອງແຂວງເຕົ້າໂຮມ ດ້ວຍການຂະຫຍາຍກຳລັງປະຕິວັດ ແລະ ການທັນທິດຕໍ່ສູ້ທາງດ້ານການເມືອງ ແລະ ການຕໍ່ສູ້ດ້ວຍອາວຸດ. ໄລຍະປີ 1964-1973 ເປັນໄລຍະຕໍ່ສູ້ຜາບແພ້ຍຸດທະສາດ ສົງຄາມພິເສດເພີ່ມທະວີຂອງຈອນເຊີນ ແລະ "ຍຸດທະສາດສົງຄາມພິເສດເພີ່ມທະວີ" ຕາມທິດສະດີ ນິກເຊີນ ຂອງຈັກກະພັດແບບໃໝ່ ແລະ ໄລຍະປີ 1973-1975 ເປັນໄລຍະຕໍ່ສູ້ເພື່ອເຮັດສຳເລັດການປະຕິວັດ, ຟື້ນຟູສັນຕິພາບໃນທົ່ວປະເທດ.

ໂດຍພາຍໃຕ້ການນຳພາ-ຊີ້ນຳ ອັນສະຫຼາດສ່ອງໃສ ຂອງພັກປະຊາຊົນ ປະຕິວັດລາວ ໃນທີ່ສຸດກໍສາມາດນຳພາປະຊາຊົນລາວທັງຊາດ ລຸກຮື້ຂຶ້ນຢຶດອຳນາດຄືນມາອີກຄັ້ງ ໃນວັນທີ 23 ສິງຫາ 1975 ດ້ວຍ 3 ບາດຄ້ອນຍຸດທະສາດ ຄື: ການລຸກຮື້ຂຶ້ນຂອງປະຊາຊົນ, ການໜູນໜີບ ຂອງກຳລັງປະກອບອາວຸດປະຕິວັດແລະການແຍກຄົນອອກ ຂອງກຳລັງທະຫານຂອງສັດຕູ. ໃນທີ່ສຸດ ໄຊຊະນະສົມບູນ ໄດ້ຕົກຢູ່ໃນກຳມືຂອງປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ໄດ້ປະກາດເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ໂລກຮັບຮູ້ຢ່າງເປັນທາງການ ໃນວັນທີ 2 ທັນວາ 1975.

ຜ່ານການຕໍ່ສູ້ອັນລະອຽດລະອ້ຽວ ແລະ ຍືດເຍື້ອຍາວນານ ຈົນກ້າວມາເຖິງວັນຢຶດອຳນາດ ເຊິ່ງແມ່ນວັນໄຊຊະນະອັນຍິ່ງໃຫຍ່ ແລະ ແມ່ນຈຸດໝາຍປາຍທາງຂອງພັກ ກໍຄືຂອງປະຊາຊົນລາວບັນດາເຜົ່າທົ່ວປະເທດ ໂດຍຜ່ານເຫດການ 2 ວັນປະຫວັດສາດ ສະແດງໃຫ້ເຫັນເຖິງໄຊຊະນະອັນເດັດຂາດ ແລະ ຍິ່ງໃຫຍ່ ຂອງການປະຕິວັດລາວ ທີ່ມີພັກປະຊາຊົນປະຕິວັດລາວ ເປັນແກນນຳ. ດັ່ງນັ້ນ, ວັນຢຶດອຳນາດ 23 ສິງຫາ 1945 ແລະ 23 ສິງ 1975 ເປັນວັນທີ່ມີຄວາມໝາຍປະຫວັດສາດສຳຄັນຂອງຊາດລາວເຮົາ. ໄຊຊະນະດັ່ງກ່າວ, ແມ່ນໝາກຜົນທີ່ເກີດຈາກການຕໍ່ສູ້ອັນຍືດເຍື້ອຍາວນານ ຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກ, ແມ່ນໝາກຜົນທີ່ເກີດຈາກຫົວຄິດປະດິດສ້າງ ດ້ວຍການນຳໃຊ້ 3 ບາດຄ້ອນຍຸດທະສາດ ເພື່ອຢຶດອຳນາດການປົກຄອງໃນທົ່ວປະເທດແບບ "ບົວບໍ່ຊ້ຳນ້ຳບໍ່ຂຸ່ນ". ແມ່ນໄຊຊະນະ ຂອງແນວທາງປະຕິວັດອັນຖືກຕ້ອງ ແລະ ການນຳພາອັນສະຫຼາດສ່ອງໃສ ຂອງພັກເຮົາ ທີ່ຮູ້ໝູນໃຊ້ລັດທິມາກ-ເລນິນ ເຂົ້າໃນສະພາບຕົວຈິງຂອງປະເທດເຮົາ. ແມ່ນໄຊຊະນະຂອງກຳລັງແຮງແຫ່ງຄວາມສາມັກຄີເປັນຈິດໜຶ່ງໃຈດຽວຂອງປະຊາຊົນທັງຊາດ, ແມ່ນໄຊຊະນະແຫ່ງຄວາມສາມັກຄີຮ່ວມສຳພັນສູ້ຮົບ 3 ລາວ-ຫວຽດນາມ-ກຳປູເຈຍ ກໍຄືການສະໜັບສະໜູນ ແລະ ຊ່ວຍເຫຼືອອັນແຂງແຮງ ຂອງບັນດາປະເທດເພື່ອນມິດ ແລະ ປະຊາຊົນຜູ້ຮັກຫອມສັນຕິພາບໃນໂລກ.

**ໂດຍ: ສີວັນ ທອມໄຊຍະເດດ**

## ຄະນະຜູ້ແທນສະພາແຫ່ງຊາດ ແລະ ສພຂ ເຂົ້າຮ່ວມສຳມະນາ ຢູ່ ສປ ຈີນ

(ສພຊ) ຄະນະຜູ້ແທນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຂອງ ສປປ ລາວ ໄດ້ເຂົ້າຮ່ວມຝຶກອົບຮົມ ພາຍໃຕ້ຫົວຂໍ້: "ສຳມະນາສຳລັບສະມາຊິກສະພາແຫ່ງຊາດລາວ" ຢູ່ ສປ ຈີນ ນຳໂດຍທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຮອງປະທານຄະນະມິດຕະພາບລັດສະພາ ລາວ-ຈີນ ພ້ອມດ້ວຍຮອງປະທານກຳມາທິການ, ຮອງຄະນະເລຂາທິການ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ແລະ ພະນັກງານວິຊາການ ລວມທັງໝົດ 25 ທ່ານ, ຍິງ 13 ທ່ານ ຢູ່ທີ່ນະຄອນຫຼວງປັກກິ່ງ ສປ ຈີນ ໃນລະຫວ່າງວັນທີ 10-30 ສິງຫາ 2023 ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານ ສປ ຈີນ.




ກອງປະຊຸມຝຶກອົບຮົມຄັ້ງນີ້, ແມ່ນຈະໄດ້ສຶກສາຄົ້ນຄວ້າລົງເລິກໃນ 15 ຫົວຂໍ້ສະເພາະ ເປັນຕົ້ນ: ຄວາມໝັ້ນຄົງທາງດ້ານພະລັງງານ ແລະ ການຮ່ວມມືສາກົນ; ແນະນຳກ່ຽວກັບສະພາບໂດຍຫຍໍ້ຂອງປະເທດຈີນ; ແນະນຳຍຸດທະສາດການພັດທະນາໂດຍຫຍໍ້; ນະໂຍບາຍເປີດປະຕູສູ່ພາຍນອກຂອງປະເທດຈີນ; ການຈັດຕັ້ງປະຕິບັດແນວຄວາມຄິດການພັດທະນາໃໝ່ ແລະ ການສ້າງລະບົບເສດຖະກິດທີ່ທັນສະໄໝ; ຮູບແບບການພັດທະນາເສດຖະກິດໝູນວຽນຂອງຈີນ ແລະ ການວິເຄາະກໍລະນີສຶກສາ; ການຄາດຄະເນການພັດທະນາເສດຖະກິດ ແລະ ແຜນການພັດທະນາ 5 ປີ ຂອງຈີນ; ການຕີຄວາມໝາຍຕໍ່ແຜນການ 5 ປີ ຄັ້ງທີ 14; ຂະບວນວິວັດ ແລະປະສົບການໃນການກໍ່ສ້າງລັດເອເລັກໂຕຣນິກຂອງຈີນ; ລະບອບພະນັກງານ-ລັດຖະກອນຂອງຈີນ; ແນະນຳສະຖານະການເສດຖະກິດມະຫາພາກຂອງຈີນ; ນະໂຍບາຍຫັນເປັນສີຂຽວດ້ານກະສິກຳ ແລະ ໝາກຜົນຂອງຈີນ; ໝາກຜົນ ແລະ ມາດຕະການໃນການກໍ່ສ້າງລັດແຫ່ງກົດໝາຍຂອງຈີນ ແລະ ການຫັນເປັນທັນສະໄໝຂອງລະບົບການປົກຄອງແຫ່ງຊາດ ແລະ ຄວາມສາມາດໃນການຄຸ້ມຄອງໃນຍຸກໃໝ່; ການມີສ່ວນຮ່ວມຂອງພົນລະເມືອງ ແລະ ການປະເມີນຜົນຂອງວຽກງານລັດຖະບານ ສປ ຈີນ.

ນອກຈາກການເຂົ້າຮ່ວມຝຶກອົບຮົມແລ້ວ ຍັງໄດ້ໄປທັດສະນະສຶກສາຢູ່ແຂວງກຸຍໂຈ ແລະ ທັດສະນະສຶກສາຢູ່ສູນທົດລອງແບບກວມລວມຂອງມະຫາຂໍ້ມູນແຫ່ງຊາດ (Big Data), ຢ້ຽມຢາມບໍລິສັດ ກຸ່ຍຢາງລາງມາເຕັກໂນໂລຊີຂໍ້ມູນຂ່າວສານຈຳກັດ, ຖານຂໍ້ມູນດິຈິຕອນອຸດສາຫະກຳໂຫລະຄົມແຂວງກຸ່ຍໂຈວແຫ່ງຊາດຈີນ, ກຸ່ມບໍລິສັດມະບັງ (ບໍລິສັດກຸ່ຍຢາງເທັກໂນໂລຊີ, ການຂົນສົ່ງສິນຄ້າດ້ວຍ ລົດບັນທຸກຈຳກັດ), ທ່ຽວຊົມແຫຼ່ງທ່ອງທ່ຽວ ທຽນເທົາຖານຂອງນະຄອນກຸ່ຍຢ່າງ. ສຳລັບຢູ່ແຂວງຢຸນນານແມ່ນຈະໄດ້ໄປຢ້ຽມຢາມເມືອງບູຮານກວ່າງຕູ້, ຢ້ຽມຊົມຫໍພິພິທະພັນຂອງບໍລິສັດຜະລິດຢາຢຸນນານປາຍເຢົ່າ, ຫໍວາງສະແດງຜະລິດຕະພັນໃໝ່ ຂອງບໍລິສັດຜະລິດຢາຢຸນນານປາຍເຢົ່າ ແລະ ໂຮງງານຜະລິດຢາ ຢຸນນານ ປາຍເຢົ່າ; ພ້ອມດຽວກັນນັ້ນ, ຄະນະຜູ້ແທນ ຍັງຈະໄດ້ໄປທ່ຽວຊົມກຳແພງເມືອງຈີນ ເຊິ່ງເປັນໜຶ່ງໃນສິ່ງມະຫັດສະຈັນຂອງໂລກ ຕື່ມອີກ.



# ສພຂ ສາລະວັນ ຊຸດທີ II ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5



(ສພຊ) ຕອນເຊົ້າວັນທີ 9 ສິງຫາ 2023 ຢູ່ທີ່ສະໂມສອນໃຫຍ່ຂອງແຂວງສາລະວັນ ໄດ້ໄຂກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ II ພາຍໃຕ້ການເປັນປະທານຂອງທ່ານ ສີເຮັງ ທອນສົມບັດ ປະທານສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີທ່ານ ປອ. ດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງ ແຂວງສາລະວັນ, ທ່ານ ສຸບັນ ສະອະບຸດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ມີບັນດາທ່ານການນຳພັກ-ລັດຂັ້ນສູງຂອງແຂວງ, ບັນດາທ່ານອະດີດການນຳຂັ້ນສູງຂອງແຂວງ, ບັນດາທ່ານຄະນະນຳພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ເຈົ້າເມືອງ ແລະ ຜູ້ຕາງໜ້າຈາກພາກສ່ວນຕ່າງໆ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 14 ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ.

ໃນພິທີ, ທ່ານ ສີເຮັງ ທອນສົມບັດ ໄດ້ກ່າວໄຂກອງປະຊຸມຢ່າງເປັນທາງການ ທັງໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ສາລະວັນ ຊຸດທີ II ໄດ້ພິຈາລະນາຮັບຮອງບັນດາເນື້ອໃນສຳຄັນຕ່າງໆຄື: ບົດລາຍງານຂອງເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດ ນິຕິກຳໃຕ້ກົດໝາຍ 4 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນແຂວງສາລະວັນ, ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງການຂົນສົ່ງໂດຍສານ ແລະ ການຂົນສົ່ງສິນຄ້າທາງບົກພາຍໃນແຂວງສາລະວັນ, ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດຢູ່ແຂວງສາລະວັນ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດວັນນັດຢູ່ແຂວງສາລະວັນ; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ປະເມີນຜົນການປະຕິບັດໜ້າທີ່ຂອງບຸກຄະລະກອນດຳລົງຕຳແໜ່ງທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ; ບົດລາຍງານຂອງ ສພຂ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023. ພ້ອມນີ້, ໄດ້ພິຈາລະນາການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ ຈຳນວນ 2 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດຢູ່ແຂວງສາລະວັນ (ສ້າງໃໝ່) ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄຸນນະພາບນ້ຳຖິ້ມທີ່ຜະລິດຈາກໂຮງງານພາຍໃນແຂວງສາລະວັນ (ປັບປຸງ).

ນອກນັ້ນ, ຍັງໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນເປັນເວລາ 3 ວັນ ເລີ່ມແຕ່ວັນທີ 9-11 ສິງຫາ 2023 ຈຶ່ງໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ.

**(ພາບ: ດີລຳພົນ, ຂ່າວ: ນິດດາວັນ)**



# ປາຖະກະຖາວັນລັດຖະທຳມະນູນ 32 ປີ ແລະ ວັນສ້າງຕັ້ງສະພາປະຊາຊົນແຂວງ 45 ປີ

(ສພຊ) ຕອນເຊົ້າຂອງວັນທີ 8 ສິງຫາ 2023 ສະພາປະຊາຊົນແຂວງຫຼວງນ້ຳທາ ພ້ອມດ້ວຍການນຳຂອງແຂວງ ໄດ້ພ້ອມກັນວາງກະຕ່າດອກໄມ້ຢູ່ຕໍ່ໜ້າອານຸສາວະລີປະທານໄກສອນ ພົມວິຫານ ແລະ ວາງພວງມາລາຢູ່ອານຸສາວະລີນັກຮົບນິລະນາມແຂວງຫຼວງນ້ຳທາ.



ຈາກນັ້ນ, ໄດ້ຈັດພິທີປາຖະກະຖາວັນປະກາດໃຊ້ລັດຖະທຳມະນູນ ຄົບຮອບ 32 ປີ (15 ສິງຫາ 1991-15 ສິງຫາ 2023) ແລະ ວັນສ້າງຕັ້ງສະພາປະຊາຊົນແຂວງ ຄົບຮອບ 45 ປີ (4 ສິງຫາ 1975-4 ສິງຫາ 2023) ຢູ່ທີ່ຫໍວັດທະນະທຳແຂວງຫຼວງນ້ຳທາ ໂດຍການປາຖະກະຖາຂອງທ່ານ ຄຳພອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມຮັບຟັງໂດຍຄະນະນຳຂອງແຂວງ, ອະດີດການນຳຂອງແຂວງ, ພະນັກງານປະຕິວັດອະວຸໂສບຳນານ, ອະດີດສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ສອງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບພ້ອມດ້ວຍພະນັກງານອ້ອມຂ້າງແຂວງເຂົ້າຮ່ວມຮັບຟັງທັງໝົດ 600 ກວ່າທ່ານ.

ທ່ານ ຄຳພອງ ອິນມານີ ໃຫ້ຮູ້ວ່າ: ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປະນາ ສປປ ລາວ ຂຶ້ນໃນວັນທີ 2 ທັນວາ 1975 ເຊິ່ງແມ່ນຜົນງານ ແລະ ໄຊຊະນະອັນຍິ່ງໃຫຍ່ທີ່ສຸດ ຂອງປວງຊົນລາວບັນດາເຜົ່າທີ່ຍາດມາໄດ້; ເປັນການໄຂສັງກາດໃໝ່, ສັງກາດທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນມີອິດສະລະພາບຢ່າງແທ້ຈິງ ພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນ ປະຕິວັດລາວ. ລັດຖະທຳມະນູນ ແຫ່ງ ສປປ ລາວ ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1991 ແລະ ໄດ້ປະກາດໃຊ້ຢ່າງເປັນທາງການ ໃນວັນທີ 15 ສິງຫາ 1991. ມາເຖິງປັດຈຸບັນ ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ມີການປັບປຸງມາແລ້ວ 2 ຄັ້ງ ຄື: ຄັ້ງທີ 1: ໃນປີ 2003 ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ V ໄດ້ຮັບຮອງເອົາລັດຖະທຳມະນູນສະບັບປັບປຸງ ເຊິ່ງປະກອບມີ 11 ໝວດ 98 ມາດຕາ. ຄັ້ງທີ 2: ປີ 2015 ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຮັບຮອງເອົາລັດຖະທຳມະນູນສະບັບປັບປຸງ ປະກອບມີ 14 ໝວດ, 119 ມາດຕາ ເຊິ່ງເຮັດໃຫ້ລັດຖະທຳມະນູນຂອງ ສປປ ລາວ ມີເນື້ອໃນຄົບຖ້ວນ ແລະ ສົມບູນກວ່າເກົ່າ.

ພ້ອມນັ້ນ, ໄດ້ຮັບຟັງມູນເຊື້ອກ່ຽວກັບວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຄົບຮອບ 45 ປີ ໂດຍອີງໃສ່ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງໃນໄລຍະໃໝ່ ແລະ ທັງເປັນການຮັບປະກັນ ໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ການເມືອງ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ທັງເປັນການມອບສິດອຳນາດໃຫ້ທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດໃຫ້ຫຼາຍຂຶ້ນ. ກົມການເມືອງສູນກາງພັກ ຈຶ່ງໄດ້ຕົກລົງສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຊຸດທີ I ຂຶ້ນໃນຂອບເຂດທົ່ວປະເທດ ໂດຍລັດຖະທຳມະນູນ ສະບັບປັບປຸງ ປີ 2015 ກໍໄດ້ກຳນົດແຈ້ງກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາປະຊາຊົນທ້ອງຖິ່ນ ປະກອບມີ 3 ພາລະບົດບາດ ຄື: ສິດ ແລະ ໜ້າທີ່ດ້ານນິຕິກຳ; ດ້ານການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ; ດ້ານການຕິດຕາມກວດກາ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2015 ມາດຕາ 88 ໄດ້ກຳນົດເອົາວັນທີ 4 ສິງຫາ 1978 ເປັນວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງເປັນຕົ້ນມາ. ພາຍຫຼັງສ້າງຕັ້ງແລ້ວ ສະພາປະຊາຊົນແຂວງຊຸດທຳອິດ ກໍໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ 3 ພາລະບົດບາດ, ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ສະພາປະຊາຊົນຂັ້ນແຂວງ ຊຸດທີ I ປະກອບດ້ວຍສະມາຊິກສະພາປະຊາຊົນແຂວງ ຈຳນວນ 16 ທ່ານ.

ໃນໂອກາດສະເຫຼີມສະຫຼອງສອງວັນສຳຄັນດັ່ງກ່າວ ໃຫ້ມີເນື້ອໃນ ແລະ ເປັນຂະບວນຟົດຟື້ນ, ເປັນການສົ່ງເສີມກິລາ ແລະ ເຕົ້າໂຮມຄວາມສາມັກຄີ ຄະນະປະຈຳສະພາປະຊາຊົນແຂວງ ໄດ້ຕົກລົງສ້າງແຜນ ແລະ ແຕ່ງຕັ້ງຄະນະຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບກັບພະແນກສຶກສາ ແລະ ກິລາແຂວງ ເພື່ອຈັດການແຂ່ງຂັນກິລາເປຕັງ ຊີງຂັນປະທານສະພາປະຊາຊົນແຂວງ ເຊິ່ງມີທັງໝົດ 47 ທີມ, ທີມຍິງ 18 ທີມ ເຊິ່ງຜົນການແຂ່ງຂັນແມ່ນທີມຊາຍທີ 1 ໄດ້ແກ່ ທີມບໍລິສັດ ກໍ່ສ້າງໄຊສົມບູນ ແລະ ທີມຍິງທີ 1 ໄດ້ແກ່ທີມ ປກສ ເມືອງຫຼວງນ້ຳທາ ໄດ້ຮັບຂັນ 1 ໜ່ວຍ ພ້ອມດ້ວຍເງິນສົດ 2 ລ້ານກີບ.

**(ນາງ ອຳພອນ ສີປະເສີດ)**



# ມອບ-ຮັບໜ້າທີ່ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ




(ສພຊ) ໃນວັນທີ 10 ສິງຫາ 2023 ສະພາປະຊາຊົນແຂວງໄຊສົມບູນ ໄດ້ຈັດພິທີມອບ-ຮັບໜ້າທີ່ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ທີ່ສະພາປະຊາຊົນແຂວງໄຊສົມບູນ ໂດຍການເປັນປະທານຂອງທ່ານ ພັອ. ວິໄຊທໍ່ ເພຍຫຼວງຈົ່ງເສີ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາຫົວໜ້າພະແນກການ, ອົງການ-ກົມກອງອ້ອມຂ້າງແຂວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ບີເຣີ ຮອງເລຂາທິການສະພາປະຊາຊົນແຂວງໄຊສົມບູນ ໄດ້ຮັບຟັງການຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງນາຍຕຳຫຼວດທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບແຂວງໄຊສົມບູນ ສະບັບເລກທີ 1297/ປກສ, ລົງວັນທີ 23 ມິຖຸນາ 2023 ແລະ ຂໍ້ຕົກລົງວ່າດ້ວຍການຍົກຍ້າຍນາຍຕຳຫຼວດທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບແຂວງໄຊສົມບູນ ສະບັບເລກທີ 1296/ປກສ, ລົງວັນທີ 23 ມິຖຸນາ 2023 ເຫັນດີຍົກຍ້າຍທ່ານ ພັທ. ທອງພຽນ ກົງສະເດັດ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ໄປຮັບໜ້າທີ່ໃໝ່ເປັນ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ເຫັນດີຍົກຍ້າຍທ່ານ ພັທ. ຄຳໝັ້ນ ພິມມະວົງສາ ຫົວໜ້າຄ້າຍຄຸ້ມຂັງ-ດັດສ້າງ ໄປຮັບໜ້າທີ່ໃໝ່ເປັນ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ; ຫຼັງຈາກນັ້ນ, ໄດ້ມີການມອບ-ຮັບໜ້າທີ່ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ຢ່າງເປັນທາງການ ໂດຍຊ່ອງໜ້າຜູ້ເຂົ້າຮ່ວມເປັນສັກຂີພິຍານ.

ໃນຕອນທ້າຍ, ທ່ານ ພັອ. ວິໄຊທໍ່ ເພຍຫຼວງຈົ່ງເສີ ໄດ້ໂອ້ລົມຕໍ່ພິທີ ໂດຍທ່ານໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການຍົກຍ້າຍ ພ້ອມທັງຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາຂອງຜູ້ເກົ່າ ແລະ ຮຽກຮ້ອງມາຍັງຜູ້ທີ່ໄດ້ຮັບຕຳແໜ່ງໃໝ່ຈົ່ງສືບຕໍ່ນຳເອົາຄວາມຮູ້ປະສົບການມາຮັບໃຊ້ເຂົ້າໃນໜ້າທີ່ການເມືອງຂອງຕົນ ໃຫ້ສົມຄູ່ກັບການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນທົ່ວແຂວງໄຊສົມບູນ, ສືບຕໍ່ຈັດຕັ້ງຜັນຂະຫຍາຍແນວທາງ, ບັນດາມະຕິຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃຫ້ເຂົ້າສູ່ລວງເລິກຕໍ່ວຽກງານນຳພາຂອງສະພາປະຊາຊົນແຂວງ ກໍຄືຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຜົນສຳເລັດບາດກ້າວໃໝ່ຂຶ້ນເລື້ອຍໆ.

**(ແສງຕາວັນ ລັດຕະນະວົງ)**

# ບໍລິສັດ ຢາງຮວາ ການຄ້າ ຂາເຂົ້າ-ຂາອອກ ຈຳກັດ ມອບເຄື່ອງຊ່ວຍເຫຼືອໃຫ້ສະພາປະຊາຊົນແຂວງຫົວພັນ



(ສພຊ) ວັນທີ 15 ສິງຫາ 2023 ຢູ່ທີ່ສະພາປະຊາຊົນແຂວງຫົວພັນ ໄດ້ຈັດພິທີມອບເຄື່ອງຊ່ວຍເຫຼືອບັນເທົາທຸກໃຫ້ແກ່ສະພາປະຊາຊົນແຂວງຫົວພັນ ເພື່ອໄປມອບຕໍ່ໃຫ້ປະຊາຊົນຜູ້ທີ່ທຸກຍາກຂາດເຂີນ, ຜູ້ປະສົບໄພພິບັດຕ່າງໆ ຢູ່ເຂດຫ່າງໄກສອກຫຼີກຂອງແຂວງຫົວພັນ ໂດຍມີຮອງເລຂາທິການ, ຫົວໜ້າຂະແໜງ ຕະຫຼອດຮອດພະນັກງານພາຍໃນສະພາປະຊາຊົນແຂວງຫົວພັນ ເຂົ້າຮ່ວມເປັນສັກຂີພິຍານນຳ.

ເຄື່ອງທີ່ນຳມາມອບຄັ້ງນີ້ ແມ່ນເຄື່ອງນຸ່ງຫົ່ມ ລວມມູນຄ່າ 5 ລ້ານກວ່າກີບ ກ່າວມອບໂດຍທ່ານ ຫາງຽນມິງຢາງ ຜູ້ອຳນວຍການບໍລິສັດ ຢາງຮວາ ການຄ້າ ຂາເຂົ້າ-ຂາອອກ ຈຳກັດ ແລະ ກ່າວຮັບໂດຍແມ່ນທ່ານ ສົມສັກ ດອນຈານິດ ຮອງປະທານສະພາປະຊາຊົນແຂວງຫົວພັນ ເຊິ່ງທ່ານ ສົມສັກ ດອນຈານິດ ກໍໄດ້ຕາງໜ້າໃຫ້ຄະນະປະຈຳສະພາປະຊາຊົນແຂວງ ມອບໃບຍ້ອງຍໍໃຫ້ບໍລິສັດ ຢາງຮວາ ການຄ້າ ຂາເຂົ້າ-ຂາອອກ ຈຳກັດ ທີ່ໄດ້ມີຜົນງານໃນການປະກອບສ່ວນຊ່ວຍເຫຼືອຄັ້ງນີ້ ທັງສະແດງຄວາມຮູ້ບຸນຄຸນ ແລະ ກ່າວຂອບໃຈຜູ້ອຳນວຍການບໍລິສັດອີກດ້ວຍ.

**(ນາງ ປຸ້ຍນິຕາ ເພັງມີໄຊ)**

# ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອຸດົມໄຊ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ແລະ ອັດລົງດ້ວຍຜົນສຳເລັດ ເຊິ່ງໄດ້ດຳເນີນຂຶ້ນໃນລະຫວ່າງວັນທີ 3-4 ສິງຫາຜ່ານມາ ພາຍໃຕ້ການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ ເລຂາຄະນະບໍລິຫານງານພັກແຂວງ ເຈົ້າແຂວງໆອຸດົມໄຊ, ມີຮອງເຈົ້າແຂວງ, ບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ເຈົ້າເມືອງ 7 ເມືອງ, ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ສະມາຊິກສະພາປະຊາຊົນແຂວງ ຊຸດທີ II, ຫົວໜ້າ-ຮອງຫົວໜ້າພະແນກ, ບັນດາທ່ານອະດີດການນຳແຂວງ, ອະດີດສະມາຊິກສະພາແຫ່ງຊາດ, ອະດີດສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານຕາງໜ້າອົງການຈັດຕັ້ງພັກ-ລັດ, 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນດາທະນາຄານທຸລະກິດ ແລະ ແຂກເຊີນ ເຂົ້າຮ່ວມ.

ທ່ານ ຄຳດີ ວົງລ້ອມ ໄດ້ມີຄຳເຫັນກ່າວປິດກອງປະຊຸມຢ່າງເປັນທາງການ ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງດັ່ງນີ້: ບົດລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ບົດລາຍງານສະພາບໄຟໄໝ້ລາມປ່າຜ່ານມາ ແລະ ມາດຕະການປ້ອງກັນໄຟໄໝ້ລາມປ່າໃນຕໍ່ໜ້າຂອງແຂວງອຸດົມໄຊ; ບົດລາຍງານການຄຸ້ມຄອງ ແລະ ປັບປຸງຮ້ານບໍລິການແລກປ່ຽນເງິນຕາ ຢູ່ແຂວງອຸດົມໄຊ; ບົດລາຍງານການຈັດຕັ້ງປະຕິບັດວຽກງານປະກັນສຸຂະພາບ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2023; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ບົດລາຍງານກ່ຽວກັບການເປັນໃຈກາງບັນດາແຂວງພາກເໜືອໃນການເປັນສູນພິສູດ ແລະ ວິໄຈຢາເສບຕິດ, ການຄຸ້ມຄອງນັກໂທດ, ຜູ້ຖືກຫາ, ຜູ້ຖືກດັດສ້າງ ແລະ ຜູ້ເຂົ້າຮັບການບຳບັດຢາເສບຕິດຢູ່ແຂວງອຸດົມໄຊ, ຄວາມຄືບໜ້າໃນການແກ້ໄຂວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ; ບົດລາຍງານຂອງສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ບົດປະເມີນຄວາມໄວ້ວາງໃຈ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ໄດ້ຄົ້ນຄ້ວາ, ພິຈາລະນາ ແລະ ຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍ ຈຳນວນ 3 ສະບັບຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ; ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສະກັດກັ້ນ ແລະ ການແກ້ໄຂບັນຫາສື່ສັງຄົມອອນລາຍຢູ່ແຂວງອຸດົມໄຊ; ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ການບໍລິການໄປສະນີ ຢູ່ແຂວງອຸດົມໄຊ.

ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາປະຊາຊົນແຂວງ ໂດຍບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຊຸດທີ II ໄດ້ຍົກສູງຄວາມຮັບຜິດຊອບທາງການເມືອງ, ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການຄົ້ນຄວ້າ, ພິຈາລະນາປະກອບຄຳເຫັນຢ່າງເລິກເຊິ່ງ ແລະ ມີຈຸດສຸມ ເຂົ້າໃສ່ແຕ່ລະເນື້ອໃນທີ່ນຳມາພິຈາລະນາໃນຄັ້ງນີ້ ໃຫ້ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບແນວທາງແຜນນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດຢ່າງສ້າງສັນ, ພາວະວິໄສ ແລະ ຄົບຖ້ວນ.

(ແສງພອນ ອິນນະລົງ)



# ຕິດຕາມກວດກາການຢັ້ງຢືນຜົນກະທົບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດໄປເປັນທີ່ດິນປະເພດອື່ນ

(ສພຊ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ໄດ້ລະບຸໄວ້ໃນກົດໝາຍ; ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກທີ 17 ແຂວງອັດຕະປື ໄດ້ຈັດກອງປະຊຸມຕິດຕາມກວດກາການຢັ້ງຢືນຜົນກະທົບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນປະເພດອື່ນລັກສະນະຖາວອນທີ່ນອນໃນປ່າປ້ອງກັນ ແລະ ປ່າຜະລິດແຫ່ງຊາດ ນ້ຳກົງ-ເຊຊຸ ເພື່ອນຳໃຊ້ເຂົ້າໃນໂຄງການກໍ່ສ້າງເສັ້ນທາງຍຸດທະສາດປ້ອງກັນຊາດ ຢູ່ເຂດເມືອງພູວົງ ແຂວງອັດຕະປື ຂອງກະຊວງປ້ອງກັນປະເທດ ເມື່ອຕົ້ນເດືອນສິງຫານີ້ ຢູ່ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງພູວົງ ໂດຍການເປັນປະທານຂອງທ່ານ ນາງ ມິນາພອນ ໄຊສົມພູ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອຕັ້ງທີ 17 ແຂວງອັດຕະປື, ປະທານສະພາປະຊາຊົນແຂວງ. ມີບັນດາທ່ານສະມາຊິກສະພາແຫ່ງ




ຊາດ ປະຈຳເຂດເລືອກຕັ້ງທີ 17, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ. ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຕາງໜ້າຈາກຫ້ອງວ່າການແຂວງ, ກອງບັນຊາການທະຫານ, ຕຳຫຼວດ, ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ, ຕາງໜ້າບໍລິສັດ ແລະ ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ພັທ. ພູວັນ ໝື່ນປາກດີ ຮອງຫົວໜ້າຫ້ອງເສນາທິການທະຫານແຂວງໄດ້ຕາງໜ້າກອງບັນຊາການທະຫານແຂວງໄດ້ລາຍງານສະພາບລວມຂອງໂຄງການໃຫ້ຊາບວ່າ: ໂຄງການທະລຸ ແລະ ຍົກລະດັບເສັ້ນທາງແຕ່ບ້ານວຽງໄຊ ຫາ ຫຼັກໝາຍ 009 ບ້ານລະມອງ ມີໄລຍະທາງຂອງການກໍ່ສ້າງທັງໝົດປະມານ 110,6 ກິໂລແມັດ ເຊິ່ງແມ່ນທາງທະລຸລຽບຊາຍແດນ ຢູ່ເມືອງພູວົງ ແຂວງອັດຕະປື, ເສັ້ນທາງດັ່ງກ່າວແມ່ນປູຊັ້ນຮອງພື້ນທາງໜາ 0,2 ຊັງຕີແມັດ, ຊັ້ນວັດສະດຸຄັດເລືອກໜາ 0,2 ຊັງຕີແມັດ, ໜ້າທາງກ້ວາງ 5,0 ແມັດ, ຕາມເສັ້ນທາງ ມີຂົວທັງໝົດ 1 ແຫ່ງ, ຂົວເຫຼັກ DS ຍາວ: 97,0 ແມັດ, ຂົວຈົມ 12 ແຫ່ງ, ຍາວທັງໝົດ 135,0 ແມັດ,ທໍ່ສີ່ຫຼ່ຽມມີທັງໝົດ: 21 ແແຫ່ງ, ລວງຍາວ: 231,0ແມັດ,ທໍ່ກົມລອດທາງມີທັງໝົດ178ແຫ່ງ,



ລວງຍາວທັງໝົດ 1.958,0 ແມັດ, ເສັ້ນທາງດັ່ງກ່າວ ແມ່ນກໍ່ສ້າງໄປຕາມຈຸດຍຸດທະສາດຂອງໂຄງການ 01728 ເປັນໂຄງການບູລິມະສິດຂອງລັດຖະບານ ສປປ ລາວ ໂດຍລັດຖະບານໄດ້ມອບໃຫ້ກະຊວງປ້ອງກັນປະເທດເປັນຜູ້ປະຕິບັດ, ມີມູນຄ່າການກໍ່ສ້າງທັງໝົດ 203 ຕື້ກີບ ໂດຍນຳໃຊ້ທຶນລັດຖະບານແຫ່ງ ສປປ ລາວ 100% ເຈົ້າຂອງໂຄງການແມ່ນກົມໃຫ່ຍເສນາທິການກະຊວງປ້ອງກັນປະເທດ, ຄະນະວິຊາການ-ທີ່ປຶກສາໂຄງການແມ່ນກົມຊ່າງແສງ, ສຳຫຼວດ-ອອກແບບໂດຍບໍລິສັດ, ມີ 3 ຫົວໜ່ວຍຮັບເໝົາກໍ່ສ້າງ ຄື: ບໍລິສັດ ສີສະເກດ ກໍ່ສ້າງຄົບວົງຈອນ ຈຳກັດ, ບໍລິສັດ ບຸບຜາພັດທະນາກໍ່ສ້າງເຄຫາສະຖານຂົວ-ທາງ ແລະ ສຳຫຼວດ-ອອກແບບ ຈຳກັດ ຜູ້ດຽວ ແລະ ບໍລິສັດ ໄລວັນ ກໍ່ສ້າງ ຂົວ-ທາງ ຈຳກັດ. ພ້ອມກັນນັ້ນ, ຍັງໄດ້ຮັບຟັງການລາຍງານຈາກຂະແໜງການທີ່ກ່ຽວຂ້ອງຕື່ມອີກ.

ຈາກນັ້ນ, ຜູ້ເຂົ້າຮ່ວມປຶກສາຫາລື, ປະກອບຄວາມຄິດຄວາມເຫັນຂໍ້ສະດວກ, ຂໍ້ຄົງຄ້າງ ແລະ ຢັ້ງຢືນເນື້ອທີ່ປ່າໄມ້, ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ບັນຫາອື່ນໆທີ່ອາດຈະເກີດຂຶ້ນຈາກການພັດທະນາຂອງໂຄງການກໍ່ສ້າງເສັ້ນທາງຍຸດທະສາດປ້ອງກັນ ທັງເພື່ອໃຫ້ມີຄວາມເປັນເອກະພາບລະຫວ່າງສູນກາງ ແລະ ຂັ້ນທ້ອງຖິ່ນ ທາງດ້ານຂໍ້ມູນ ແລະ ເນື້ອໃນລະອຽດ, ຈະແຈ້ງ ເພື່ອເປັນຂໍ້ມູນລາຍງານໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າພິຈາລະນາຕົກລົງບັນຫາກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນປະເພດອື່ນ ລັກສະນະຖາວອນໃນເຂດປ່າປ້ອງກັນ ແລະ ປ່າຜະລິດແຫ່ງຊາດ ນ້ຳກົງ-ເຊຊຸ ໃຫ້ມີຄວາມຖືກຕ້ອງຕາມຫຼັກການ ແລະ ສອດຄ່ອງຕາມລະບຽບກົດໝາຍ.

ໃນຕອນທ້າຍ, ທ່ານ ນາງ ມິນາພອນ ໄຊສົມພູ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ຕິດຕາມຄຸ້ມຄອງ, ປ້ອງກັນເຂດໂຄງການກໍ່ສ້າງໃຫ້ຖືກຕ້ອງຕາມຫຼັກການ, ຂັ້ນຕອນ ແລະ ລະບຽບກົດໝາຍ, ໂຄສະນາເຜີຍແຜ່ ຊຸກຍູ້ ໃຫ້ພໍ່ແມ່ປະຊາຊົນມີສ່ວນຮ່ວມເປັນເຈົ້າການໃນການປົກປັກຮັກສາປ່າໄມ້, ສືບຕໍ່ເອົາໃຈໃສ່ສຶກສາປະເມີນເພື່ອປ້ອງກັນຜົນກະທົບສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ບັນຫາອື່ນໆ ທີ່ອາດຈະເກີດຂຶ້ນໃນໄລຍະຕໍ່ໄປ.

(ວິມັດ)

# ຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນຂັ້ນແຂວງ

(ສພຊ) ສະພາປະຊາຊົນແຂວງ 3 ແຂວງຄື: ໄຊຍະບູລີ, ບໍລິຄຳໄຊ ແລະ ສະຫວັນນະເຂດ ໄດ້ຖະແຫຼງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຕົນ ຕໍ່ສື່ມວນຊົນ ດັ່ງນີ້:


ສພຂ ໄຊຍະບູລີ

ໃນວັນທີ 16 ສິງຫາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ, ທ່ານ ນາງ ວັນນາ ພິມວິສອນ ເລຂາທິການສະພາປະຊາຊົນແຂວງໄຊຍະບູລີ ໄດ້ຖະແຫຼງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຈະໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 23 ສິງຫາ 2023 ແລະ ຈະດຳເນີນເຖິງວັນທີ 26 ສິງຫາ 2023 ຢູ່ທີ່ຫ້ອງປະຊຸມໃຫ່ຍຂອງແຂວງໄຊຍະບູລີ.


ສພຂ ບໍລິຄຳໄຊ

ກ່ອນໜ້ານີ້, ໃນວັນທີ 11 ສິງຫາ 2023 ທ່ານ ນາງ ຟອງສະໝຸດ ພົງວິຈິດ ເລຂາທິການສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ເຊິ່ງຈະໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 23-25 ສິງຫາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ.

ແລະ ໃນຕອນບ່າຍວັນທີ 10 ສິງຫາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດພິທີຖະແຫຼງຂ່າວຂຶ້ນ ໂດຍທ່ານ ພູທອນ ພຸດທະຂັນຕິ ເລຂາທິການສະພາປະຊາຊົນແຂວງສະຫວັນນະເຂດ ໃນນາມຫົວໜ້າກອງເລຂາກອງປະຊຸມ, ຕາງ


ສພຂ ສະຫວັນນະເຂດ

ໜ້າຄະນະປະສະພາປະຊາຊົນແຂວງ ໄດ້ຖະແຫຼງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ເຊິ່ງຈະໄດ້ໄຂຂຶ້ນໃນຕອນເຊົ້າວັນອັງຄານວັນທີ 23 ສິງຫາ 2023 ແລະ ຈະດຳເນີນໄປຈົນຮອດ 25 ສິງຫາ 2023 ທີ່ຫໍວັດທະນະທຳໄກສອນພົມວິຫານ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ.

ທັງ 3 ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ຈະໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງ ພ້ອມທັງປະກອບຄຳເຫັນ, ຊັກຖາມຕໍ່ບົດລາຍງານ ແລະ ການປະຕິບັດໜ້າທີ່ຕ່າງໆຂອງອົງການປົກຄອງທ້ອງຖິ່ນຂອງຕົນ ເປັນຕົ້ນແມ່ນວຽກງານອົງການປົກຄອງແຂວງ, ວຽກງານສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນ, ວຽກງານສະພາປະຊາຊົນແຂວງ ແລະ ວຽກງານອື່ນໆທີ່ຈຳເປັນ ແລະ ຮີບດ່ວນຂອງແຕ່ລະແຂວງຕື່ມອີກ.

ໃນໄລຍະດຳເນີນກອງປະຊຸມ ຈະໄດ້ມີການຖ່າຍທອດສົດບາງເນື້ອໃນທີ່ສຳຄັນຈຳນວນໜຶ່ງ ຜ່ານສະຖານີວິທະຍຸກະຈາຍສຽງແຂວງ ແລະ ຈະໄດ້ເປີດກວ້າງຮັບເອົາການປະກອບຄຳຄິດ-ຄຳເຫັນ, ຄຳສະເໜີໂດຍກົງຈາກພໍ່ແມ່ປະຊາຊົນບັນດາເຜົ່າ ມາຍັງກອງປະຊຸມ ຜ່ານໂທລະສັບສາຍດ່ວນໃນໂມງລັດຖະການຂອງສະພາປະຊາຊົນແຂວງໄຊຍະບູລີ ໝາຍເລກ 074 156, ສະພາປະຊາຊົນແຂວງບໍລິຄຳໄຊ ໝາຍເລກ 054 156 ແລະ ສະພາປະຊາຊົນແຂວງສະຫວັນນະເຂດ ໝາຍເລກ 041 156 ໂດຍບໍ່ເສຍຄ່າ.

# ສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ແລະ ວັນສ້າງຕັ້ງແນວລາວສ້າງຊາດ




(ສພຊ) ພິທີສະເຫຼີມສະຫຼອງສອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ (15 ສິງຫາ 1991-15 ສິງຫາ 2023) ແລະ ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 73 ປີ (13 ສິງຫາ 1950-15 ສິງຫາ 2023) ໄດ້ຈັດຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນອັງຄານທີ 15 ສິງຫາ 2023 ຢູ່ທີ່ສະໂມສອນແຂວງອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງອຸດົມໄຊ; ມີບັນດາທ່ານກຳມະການປະຈຳພັກແຂວງ, ກຳມະການປະຈຳສະພາປະຊາຊົນແຂວງ, ອະດີດການນຳແຂວງ, ກຳມະການແນວລາວສ້າງຊາດແຂວງ, ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ສອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ,ພະນັກງານຫຼັກແຫຼ່ງອ້ອມຂ້າງແຂວງ, ບັນດາວິສະຫະກິດ ແລະ ແຂກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ສົມຈິດ ປັນຍາສັກ ກຳມະການປະຈຳພັກແຂວງ, ຮອງເຈົ້າແຂວງໆອຸດົມໄຊ ໄດ້ປາຖະກະຖາມູນເຊື້ອວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ (15 ສິງຫາ 1991-15 ສິງຫາ 2023) ແລະ ທ່ານ ວັນນາ ແກ້ວສັນຕິ ກຳມະການປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງອຸດົມໄຊ ໄດ້ເລົ່າມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການແນວລາວສ້າງຊາດ ຄົບຮອບ 73 ປີ (13 ສິງຫາ 1950-15 ສິງຫາ 2023), ການເຕີບໃຫຍ່ຂະຫຍາຍຕົວຂອງອົງການແນວລາວສ້າງຊາດແຂວງອຸດົມໄຊ ແລະ ຜົນງານການເຄື່ອນໄຫວໃນໄລຍະຜ່ານມາ.

ໂອກາດດັ່ງກ່າວ, ທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ ທັງເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ຍັງໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງ ຊຸດທີ II ອີກດ້ວຍ; ພ້ອມດຽວກັນນີ້, ໄດ້ມີພິທີມອບໃບຍ້ອງຍໍໃຫ້ບໍລິສັດ CNP ຂຸດຄົ້ນແຮ່ເຫຼັກ ແຂວງອຸດົມໄຊ ທີ່ໄດ້ໃຫ້ການອຸປະຖຳວັດຖຸປັດໄຈ ໃນພິທີສະເຫຼີມສະຫຼອງຄັ້ງນີ້.

**(ນັກຂ່າວ: ສພຂ ອຸດົມໄຊ)**

ເຝົ້າໄວ້ ໄດ້ຍິນສຽງ

❖ ວິເສດ ສະແຫວງສຶກສາ

# ໄອຊີທີ (ICT) ໃຊ້ດີໃຊ້ເປັນ ຈຶ່ງເຫັນຄຸນຄ່າ

ມື້ນີ້ຂໍໂງໂງ້ງໂຄ້ງມາເວົ້າເລື່ອງທີ່ພົວພັນກັບເຕັກໂນໂລຊີ ຂໍ້ມູນຂ່າວສານ ລໍ້າຍຸກບຸກສະໄໝ ເຊິ່ງມີທັງດ້ານດີ ແລະ ດ້ານລົບ ຂຶ້ນກັບໃຊ້ເປັນ ຫຼື ບໍ່ເປັນ, ສອດຄ່ອງກັບປະໂຫຍກຄະຕິເຕືອນໃຈວ່າ: "ໃຊ້ເປັນຈຶ່ງເຫັນຄຸນຄ່າ ໃຊ້ບໍ່ເຂົ້າທ່າ ເປັນບ້າສາມປີ". ສໍາລັບບົດນີ້ ຂໍລົງເລິກສະເພາະແຕ່ເລື່ອງ "ການໃຊ້ບໍ່ເຂົ້າທ່າ" ວ່າຢູ່ບາງປະເທດນັ້ນເຂົາມີມາດຕະການຄວບຄຸມ, ປາບປາມ ແລະ ລົງໂທດແນວໃດຕໍ່ກໍລະນີ ທີ່ມີການນໍາໃຊ້ສື່ສັງຄົມ ໄປໃນທາງບໍ່ດີ ເຊັ່ນ ໂຄສະນາເກີນຄວາມເປັນຈິງ, ການໃສ່ຮ້າຍປ້າຍສີ ສ້າງຄວາມເສື່ອມເສຍຕໍ່ວຽກ ແລະ ສັກສີຂອງຄົນອື່ນໆ ກໍຄືການນໍາໃຊ້ເຕັກໂນໂລຊີນີ້ເພື່ອລັກເຈາະເອົາຂໍ້ມູນສ່ວນຕົວຂອງຄົນອື່ນ (ເອີ້ນວ່າແຮັກຂໍ້ມູນ). ກ່ອນໜ້ານີ້ປະມານ 6 ປີຜ່ານມາຢູ່ ສປ ຈີນ ໄດ້ເກີດມີຂະບວນການ "ໝໍຢາວິເສດ" ທີ່ວ່າສາມາດປິ່ນປົວພະຍາດທຸກຊະນິດ. ບັນດາໝໍຢາວິເສດດັ່ງກ່າວທີ່ມາໃນຄາບຜູ້ຊ່ຽວຊານດ້ານການແພດນັ້ນ ເຄື່ອນໄຫວເພື່ອເຂົ້າເຖິງໂຮງພະຍາບານສໍາຄັນຫຼາຍໆ ແຫ່ງ ແນໃສ່ເກັບກໍາຂໍ້ມູນກ່ຽວກັບຄົນເຈັບ ແລະ ວິທີການປິ່ນປົວ ຈາກນັ້ນພວກເຂົາກໍຕິສະນິດເຂົ້າກັບຄົນເຈັບ ເພື່ອຫຼອກໃຫ້ຊື້ຢາວິເສດຈາກພວກເຂົາດ້ວຍລາຄາງາມໆ. ເປົ້າໝາຍຄົນເຈັບທີ່ພວກຕົ້ມຕຸ໋ນໃຫ້ຄວາມສໍາຄັນກໍຄືຜູ້ເຖົ້າ ແລະ ບັນດາຄົນເຈັບຈາກພະຍາດທີ່ປົວຍາກເຊັ່ນ ໂຣກເອດ, ວັນນະໂລກ, ເບົາຫວານ ແລະ ອື່ນໆ . ຂ່າວບອກວ່າເລີ່ມແຕ່ຕົ້ນເດືອນທັນວາ 2018. ເຈົ້າໜ້າທີ່ໃນນະຄອນ ຈົ່ງຈິງ ໄດ້ເປີດບັ້ນກວາດລ້າງ ແລະ ສາມາດຈັບກຸມບັນດາ ໝໍຢາວິເສດ ໄດ້ທັງໝົດ 323 ຄົນ. ນອກຈາກນັ້ນ, ບັ້ນກວາດລ້າງ ຍັງໄດ້ດໍາເນີນຢູ່ອີກ 30 ແຫ່ງ ໃນ 10 ແຂວງ ແລະ ນະຄອນ, ສາມາດເລີກຮື້ເຄືອຂ່າຍ ອາຊະຍາກໍາຕົ້ມຕຸ໋ນ ໄດ້ 16 ກຸ່ມ ທີ່ພົວພັນກັບການຫຼອກລວງ ຂາຍຢາດີວິເສດ ກວ່າ 10,000 ກໍລະນີ ທີ່ມີຍອດ ເງິນໝູນວຽນຈໍານວນກວ່າ 10 ລ້ານກວ່າຢວນ ( ປະມານ 1,51 ລ້ານ ໂດລາສະຫະລັດໃນເວລານັ້ນ). ທາງການຈີນຍາມໃດກໍ່ໃຫ້ຄວາມສໍາຄັນຕໍ່ການໃຫ້ ແລະ ການໃຊ້ບໍລິການຂອງເຄືອຂ່າຍສື່ສັງຄົມ ໂດຍໄດ້ຈັດໃຫ້ມີ "ອາທິດເພື່ອຄວາມປອດໄພທາງໄຊເບີ" ປະຈໍາແຕ່ລະປີ ໃນຮູບການສໍາມະນາຝຶກອົບຮົມໃຫ້ຜູ້ເຂົ້າຮ່ວມຮູ້ກ່ຽວກັບຄວາມປອດໄພ ແລະ ຄວາມໝັ້ນຄົງທາງໄຊເບີ ເຊິ່ງກວມເອົາຄວາມໝັ້ນຄົງທາງໄຊເບີສໍາລັບໄວໜຸ່ມ, ຄວາມກ້າວໜ້າທາງປັນຍາປະດິດ ແລະ ການປົກປ້ອງຂໍ້ມູນສ່ວນບຸກຄົນ. ບັ້ນຝຶກອົບຮົມຄວາມຮູ້ດ້ານໄອທີນີ້ ເລີ່ມຈັດຢູ່ຕົວເມືອງໃຫຍ່ໆ ແລ້ວລາມລົງໄປສູ່ຊຸມຊົນຂັ້ນທ້ອງຖິ່ນຮາກຖານ, ສະຖານທີ່ການສຶກສາ, ບ້ານ ແລະ ໂຮງຈັກໂຮງງານຕາມລໍາດັບ.




ໃນຕົ້ນປີ 2023 ໄດ້ມີຂ່າວອອກມາ ຈາກອົດສະຕຣາລີ ວ່າ ທາງການຂອງປະເທດນີ້ ໄດ້ປະກາດໃຊ້ກົດໝາຍສະບັບປັບປຸງ ກ່ຽວກັບການປົກປ້ອງຂໍ້ມູນສ່ວນບຸກຄົນ ໂດຍໄດ້ເພີ່ມໂທດປັບໃໝຕໍ່ຜູ້ລະເມີດ. ໃນກົດໝາຍສະບັບເກົ່ານັ້ນ ອັດຕາການປັບໃໝສູງສຸດແມ່ນ 2,2 ລ້ານໂດລາອົດສະຕຣາລີ, ສ່ວນໃນກົດໝາຍສະບັບປັບປຸງນີ້, ການປັບໃໝແມ່ນອີງໃສ່ 3 ເງື່ອນໄຂແຕກຕ່າງກັນ ໂດຍໄດ້ກໍານົດເພດານດັ່ງລຸ່ມນີ້.

1. ກໍານົດອັດຕາສູງສຸດ 50 ລ້ານໂດລາ ອົດສະຕຣາລີ, 2. ປັບໃໝໃນອັດຕາ 3 ເທົ່າຕົວ ຂອງຜົນປະໂຫຍດທີ່ຜູ້ລະເມີດໄດ້ຮັບຈາກການລັກລອບໃຊ້ຂໍ້ມູນສ່ວນຕົວຂອງຄົນອື່ນ ແລະ ປັບໃໝໃນອັດຕາ 30% ຂອງເງິນໝູນວຽນທັງໝົດຂອງບໍລິສັດທີ່ລະເມີດ. ຂ່າວ ບອກວ່າກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນສ່ວນບຸກຄົນ ສະບັບປັບປຸງນີ້ ອອກມາໃນຫາມກາງທີ່ມີກໍລະນີລະເມີດຂໍ້ມູນສ່ວນບຸກຄົນຫຼາຍທີ່ສຸດໃນອົດສະຕຣາລີ. ໃນປີ 2022, ເຄືອຂ່າຍໂທລະສັບມືຖື Optus ໄດ້ເສຍຂໍ້ມູນສ່ວນບຸກຄົນຂອງລູກຄ້າສູງເຖິງ 9,8 ລ້ານຄົນ ສ່ວນສູນ Medibank ທີ່ໃຫ້ບໍລິການປະກັນໄພສຸຂະພາບລູກຄ້າກໍໄດ້ເສຍຂໍ້ມູນຂອງລູກຄ້າສູງເຖິງ 9,7 ລ້ານຄົນ.




## ຍາກບໍ່ນ້ຳເຜິ້ງພະຈັນ

*#ບ່າວກະບື*

ລູກສາວນາງແຈ່ມ ຊື່ສາວມາດດີ ພວມຢູ່ໃນໄລຍະກະກຽມແຕ່ງດອງ. ແຕ່ວ່າຍິ່ງວັນແຕ່ງຫຍັບໃກ້ເຂົ້າມາເທົ່າໃດ, ນາງກໍແຮ່ງຮູ້ສຶກກະວົນກະວາຍ. ຝ່າຍຜູ້ເປັນແມ່ສັງເກດອາການດັ່ງກ່າວອອກ ຈຶ່ງຖາມຫາສາເຫດ. ສາວມາດດີຕອບວ່າ: "ເລື່ອງກັງວົນໃຈນັ້ນກໍຄື ເລື່ອງຊິໜີໄປດື່ມນ້ຳເຜິ້ງພະຈັນກັບເຂົາຫັ້ນລະ"

"ຢ່າປ່ອຍໃຫ້ເລື່ອງນີ້ລົບກວນລູກເດະ" ຜູ້ເປັນແມ່ຢືນຢັນ

"ເມື່ອແມ່ແຕ່ງດອງ ແມ່ກໍໄປດື່ມນ້ຳເຜິ້ງພະຈັນຄືກັນ, ມັນບໍ່ແມ່ນເລື່ອງເປັນເລື່ອງຕາຍຫຍັງດອກລູກເອີຍ".

"ໂຍວ ! ແມ່ກໍ່ສະບາຍຢູ່ດອກ ເພາະວ່າແມ່ໄປກັບອີ່ພໍ່ເດ"

## HONEYMOON PROBLEM

*# BAOKBU*

Mrs Chaem's daughter - Mathdy was to be married. But as the wedding day drew closer, she grew more nervous. This was noticed by her mother who asked the reason.

"it's the thought of going away on the honeymoon with him that's worrying me", replied Mathdy.

"Don't let that bother you, " assured her mother,

" I went on my honeymoon after I got married. So it's no big deal".

"Ah, it was all right for you because you went with papa."




ລວດສາຍຫຍຸ້ງຢູ່ຊຸມຊົນ ຄືມົນລະພິດຕໍ່ຊີວິດ

● ໂດຍ : ພູຜາ




ຕໍ່ຈາກສະບັບກ່ອນ

3. ປະຕິບັດພັນທະພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ປະຕິບັດພັນທະອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

# ກົດໝາຍ ວ່າດ້ວຍວິຈິດສິນ

**ໝວດທີ 2**

**ນາມມະຍົດສິລະປິນວິຈິດສິນ**

**ມາດຕາ 53 ນາມມະຍົດສິລະປິນວິຈິດສິນ**

ນາມມະຍົດສິລະປິນວິຈິດສິນ ແມ່ນ ການຍ້ອງຍໍ, ຈາລຶກຄຸນງາມຄວາມດີ ແລະ ຢັ້ງຢືນຜົນງານທີ່ໂດດເດັ່ນຂອງນັກສິລະປິນວິຈິດສິນ ທີ່ໄດ້ສ້າງຜົນງານດ້ານວິຈິດສິນ ແລະ ເຄື່ອນໄຫວວຽກງານວິຈິດສິນ ຊຶ່ງເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ເປັນທີ່ຍອມຮັບຂອງສັງຄົມ.

ນາມມະຍົດສິລະປິນວິຈິດສິນ ມີ ສອງປະເພດ ດັ່ງນີ້:

1. ສິລະປິນວິຈິດສິນແຫ່ງຊາດ;
2. ສິລະປິນວິຈິດສິນດີເດັ່ນ.

**ມາດຕາ 54 ສິລະປິນວິຈິດສິນແຫ່ງຊາດ**

ສິລະປິນວິຈິດສິນແຫ່ງຊາດ ແມ່ນ ຜູ້ທີ່ໄດ້ຮັບນາມມະຍົດຂັ້ນສູງສຸດ ດ້ວຍການຮັບຮອງຂອງປະທານປະເທດ ແຫ່ງ ສປປ ລາວ ຕາມການສະເໜີຂອງນາຍົກລັດຖະມົນຕີ.

ອ່ານຕໍ່ສະບັບໜ້າ

# ຊົມເຊີຍ

## ວັນສ້າງຕັ້ງວັນສື່ມວນຊົນ – ການພິມຈຳໜ່າຍ

ຄົບຮອບ 73 ປີ (13 ສິງຫາ 1950 – 13 ສິງຫາ 2023)




**ຄະນະນຳຂັ້ນສູງ ສະພາແຫ່ງຊາດ**

ເວລາໃດ ກໍໄດ້ໃຫ້ທິດຊີ້ນຳຢ່າງໃກ້ຊິດຕິດແທດຕໍ່ວຽກງານສື່ມວນຊົນ ສຽງຂອງສະພາແຫ່ງຊາດ ໄດ້ມີການພັດທະນາ ແລະ ຫັນປ່ຽນໃໝ່ຢ່າງຕັ້ງໜ້າ




# ມືອາຊີບ

# ຕົ້ນກົບເມກ



ຄຳວ່າມືອາຊີບ ຕາມຜູ້ຂຽນເຂົ້າໃຈວ່າ: ຜູ້ກ່ຽວ ຫຼື ບຸກຄົນດັ່ງກ່າວເຮັດໜ້າທີ່ວຽກງານໃດໜຶ່ງ-ສາຂາໃດໜຶ່ງຈົບຊ່ຽວຊານ, ຊຳນານສະເພາະດ້ານ, ຊື່ສັດຈິງໃຈ ພໍເຖິງເວລາຮັບໜ້າວຽກ-ລົງມືປະຕິບັດ ກໍສຳເລັດຢ່າງຈົບງາມ ເຊິ່ງຕ່າງກັບຜູ້ບໍ່ແມ່ນມືອາຊີບ ທີ່ຢາກເປັນຄືມືອາຊີບ ແລ້ວອຸປະໂລກໂຕເອງຂຶ້ນໃສ່ບົດບາດມືອາຊີບ ບາດລົງມືວຽກຕົວຈິງແລ້ວ ຈຶ່ງຮູ້ສຶມືໂຕເອງບໍ່ເຖິງ ຜົນງານອອກມາຈຶ່ງບໍ່ມີໃຜຢາກໃຊ້-ຢາກຈ້າງ ດັ່ງນັ້ນ, ມືອາຊີບ ຈຶ່ງບໍ່ສາມາດເປັນໄດ້ມື້ໜຶ່ງວັນດຽວ.

ຜູ້ຂຽນເວົ້າເຖິງ: ມືອາຊີບ ກໍເພື່ອຢາກທຽບໃສ່ກັບຄຳວ່າ ນັກວິຊາການດ້ານໃດໜຶ່ງ ຫຼື ຜູ້ຮຽນຈົບ, ມີຄວາມຮູ້ສາຂາໃດໜຶ່ງທີ່ແນ່ນອນ; ລົງມືເຮັດວຽກໄດ້ດີ, ຜົນງານເດັ່ນ, ຮັກອາຊີບ ແລະ ຊື່ກົງ ທັງມີຈັນຍາບັນຕໍ່ອາຊີບ ແລະ ວຽກງານຂອງຕົນ, ຍົກຕົວຢ່າງ: ຖ້າວ່າໃຜຜູ້ໃດກໍຕາມ ຢາກເປັນມືອາຊີບບໍ່ແມ່ນວ່າຊິອາໄສແຕ່ໝູ່ຄູ່ພັກພວກ ຍົກຍໍໂຕເອງ-ເຊີດຊູໂຕເອງ ດ້ວຍຄຳຈູງໃຈ (ຊື້ໃຈ) ເຮັດເຖິງປານນັ້ນ ຜູ້ກ່ຽວ (ຜູ້ບວດໂຕເອງ, ອຸປະໂລກໂຕເອງ) ເວລາມີຜົນງານອອກມາບໍ່ເປັນວິຊາການ ເພາະບໍ່ໄດ້ສັ່ງສົມຄວາມຮູ້ວິຊາການສະເພາະດ້ານມາຍາວນານ ບອກກັບພຽງແຕ່ເຫັນປະໂຫຍດ ເຫັນຖານະພາບພົດ ແລ້ວຈຶ່ງຢາກສ້າງໂຕເອງສ້າງພາບລັກຂຶ້ນມາທັນທີ ເຊິ່ງເຖິງແມ່ນວ່າສ້າງຜົນງານໄດ້ ກໍຍັງບໍ່ແມ່ນມືອາຊີບ-ບໍ່ເປັນວິຊາການ.

ຄຳວ່າມືອາຊີບ ຫຼື ນັກວິຊາການສະເພາະດ້ານ ຈຶ່ງບໍ່ແມ່ນຂອງງ່າຍ ສ້າງມັນຂຶ້ນມາໄດ້ມື້ໜຶ່ງວັນດຽວ ຍົກຕົວຢ່າງຕື່ມວ່າ: ຖ້າມີນັກຂຽນຄົນໜຶ່ງບໍ່ໄດ້ເລີ່ມຕົ້ນມາແຕ່ນ້ອຍ ຫຼື ມີອາຊີບອື່ນມາ ແຕ່ຜັນຕົວເອງຂີດຂຽນສຳເລັດໄວ ຜູ້ກ່ຽວອາດມີພອນສະຫວັນ; ມີຄວາມຂະຫຍັນ; ໝັ່ນພຽນ ແຕ່ບໍ່ສາມາດຊື້ໃຈຄົນອ່ານທີ່ເປັນນັກວິຊາການສະເພາະດ້ານແບບມືອາຊີບໄດ້ສະເໝີໄປ.

ການຕັດສິນວ່າ: ໃຜເກັ່ງດ້ານໃດ, ຜົນງານໃດເປັນວິຊາການແທ້ ຕ້ອງເອົານັກວິຊາການສາຂາດຽວກັນມາເບິ່ງ ມີຄຳເຫັນ, ຫຼີກເວັ້ນນັກວິຊາການດ້ານໜຶ່ງແຕ່ໄປເອົານັກທຸລະກິດມາຕັດສິນຜົນງານ ຫຼື ຄົນຖ່າຍຮູບພັດໄປຕັດສິນຜົນງານວິຊາການດ້ານອື່ນ ວ່າຄັກດີເດັ່ນແບບນັ້ນແບບນີ້ ນັ້ນບໍ່ແມ່ນມືອາຊີບ ແລະ ບໍ່ແມ່ນນັກວິຊາການແທ້!

ສະເໜີແລກປ່ຽນ

# 23 ສິງຫາ ວັນຍຶດອຳນາດທົ່ວປະເທດ

# ບັງເອີນ

ໃນປະຫວັດສາດຍຸກໃໝ່ແຫ່ງການຕໍ່ສູ້ຂອງປະຊາຊົນລາວເຮົາ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໄດ້ມີການຍຶດອຳນາດຈາກພວກຈັກກະພັດລ່າເມືອງຂຶ້ນ ແລະ ລູກແຫຼ້ງຕົນມີເຖິງ 2 ຄັ້ງຄື: ວັນທີ 23 ສິງຫາ 1945 ແລະ ວັນທີ 23 ສິງຫາ 1975 ເຊິ່ງແມ່ນເຫດການສຳຄັນທາງປະຫວັດສາດຂອງລາວເຮົາ ທີ່ສະແດງໃຫ້ເຫັນມານະຈິດ ແລະ ມູນເຊື້ອແຫ່ງການຕໍ່ສູ້ຂອງປະຊາຊົນລາວບັນເຜົ່າທີ່ຮັກຊາດ ພາຍໃຕ້ການນຳພາຂອງພັກ ເພື່ອຄວາມເປັນເອກະລາດຂອງຊາດ ແລະ ອິດສະຫຼະພາບຂອງຕົນ ດ້ວຍຈິດໃຈ “ຍອມຕາຍດີກວ່າຍອມເປັນຂ້ອຍຂ້າຕ່າງຊາດ”.

ການຍຶດອຳນາດໃນວັນທີ 23 ສິງຫາ 1945 ເປັນການປະກາດເອກະລາດ ເປັນການເຕົ້າໂຮມແຜນດິນລາວເປັນເອກະພາບ, ທັງໄດ້ປ່ຽນແປງລະບອບການປົກຄອງ, ລົບລ້າງທຸກສັນຍາທີ່ລາວໄດ້ເຊັນກັບຝຣັ່ງກ່ອນໜ້ານີ້, ປະກາດໃຊ້ລັດຖະທຳມະນູນຊົ່ວຄາວ, ປະກາດໃຊ້ເພງຊາດ, ທຸງຊາດສາມສີ ແລະ ປະກາດແຕ່ງຕັ້ງຄະນະລັດຖະບານຊົ່ວຄາວ (ລັດຖະບານລາວອິດສະຫຼະ) ທັງແມ່ນເຫດການສຳຄັນທາງປະຫວັດສາດ ແຫ່ງການຕໍ່ສູ້ຕ້ານລັດທິລ່າເມືອງຂຶ້ນແບບເກົ່າ; ພ້ອມກັນນັ້ນ, ກໍແມ່ນການກຳແໜ້ນໂອກາດ ເພື່ອອຳນວຍຄວາມສະດວກໃຫ້ແກ່ເຫດການທີ່ຈະເກີດຂຶ້ນຈາກສະພາບແວດລ້ອມສາກົນ ເພື່ອຍາດເອົາໄຊຊະນະ ແລະ ສາມາດຍຶດອຳນາດມາສູ່ປະຊາຊົນກໍຄືກຳລັງປະຕິວັດ ເຊິ່ງທ່ານໄກສອນ ພົມວິຫານ ໄດ້ຕີລາຄາວ່າ: “ເປັນເທື່ອທຳອິດທີ່ປະຊາຊົນເຮົາ ໄດ້ກາຍເປັນເຈົ້າຂອງປະເທດຊາດ ແລະ ຊາຕາກຳຂອງຕົນເອງ ພາຍຫຼັງທີ່ມີຊີວິດຢູ່ພາຍໃຕ້ແອກແຫ່ງການເປັນຂ້ອຍຂ້າ ແລະ ປະເທດຊາດຖືກຕັດແບ່ງມາເປັນເວລາດົນນານ”.

ໄຊຊະນະດັ່ງກ່າວ ໄດ້ເປີດສາກໃຫ້ແກ່ສັງຄົມໃໝ່ ສັງຄົມທີ່ປະຊາຊົນເຮົາໄດ້ຮັບການປຸກລະດົມ ແລະ ຕື່ນຕົວເຂົ້າຮ່ວມການຕໍ່ສູ້ກູ້ຊາດ ເພື່ອກອບກູ້ປະເທດຊາດໃຫ້ຫຼຸດພົ້ນອອກຈາກແອກປົກຄອງຂອງຕ່າງດ້າວ; ການຍຶດອຳນາດໃນວັນທີ 23 ສິງຫາ 1945 ຈະບໍ່ໄດ້ນຳໄປສູ່ການສ້າງຕັ້ງ ອຳນາດການປົກຄອງໃໝ່ຂອງປະຊາຊົນຂຶ້ນກໍຕາມ ແຕ່ກໍໄດ້ຖືກຈາລຶກໄວ້ໃນໜ້າປະຫວັດສາດແຫ່ງການຕໍ່ສູ້ກູ້ຊາດຂອງຊາດລາວເຮົາຕະຫຼອດໄປ.

ພາຍຫຼັງພາກໃຕ້ຫວຽດນາມໄດ້ຮັບການປົດປ່ອຍ, ປະເທດຫວຽດນາມໄດ້ທ້ອນໂຮມເປັນເອກະພາບ ກ້າວສູ່ສັງຄົມໃໝ່ແຫ່ງການສ້າງສາສັງຄົມນິຍົມ ໃນປີ 1975 ໂດຍກຳແໜ້ນກາລະໂອກາດ ພັກເຮົາໄດ້ປະຕິບັດຍຸດທະສາດ 3 ບາດກ້ອນຍຸດທະສາດ ດຳເນີນການຍຶດອຳນາດໂດຍສັນຕິວິທີແບບ “ບົວບໍ່ໃຫ້ຊ້ຳ ນ້ຳບໍ່ໃຫ້ຂຸ່ນ, ແຕ່ຈັບປາໄດ້ທັງໝົດ”; ພາຍຫຼັງທີ່ປະຊາຊົນຢູ່ແຂວງຕ່າງໆໃນຂອບເຂດທົ່ວປະເທດ ໄດ້ລຸກຮື້ຂຶ້ນຕໍ່ສູ້ຍຶດອຳນາດ, ທັບມ້າງການປົກຄອງ, ກົນໄກ ແລະ ກົງຈັກແຫ່ງສິດອຳນາດຂອງລະບອບສັກດີນາ ເຄິ່ງຫົວເມືອງຂຶ້ນໄດ້ຢ່າງສິ້ນເຊີງ ; ສະນັ້ນ, ວັນທີ 23 ສິງຫາ 1975 ຈຶ່ງເປັນວັນທີ່ມີຄວາມໝາຍ ຄວາມສຳຄັນ ສຳລັບປະຊາຊົນລາວທັງຊາດ ເພາະວ່າໄຊຊະນະດັ່ງກ່າວ ແມ່ນໝາກຜົນແຫ່ງການຕໍ່ສູ້ປະຕິວັດອັນຍຶດເຍື້ອຍາວນານຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ແລະ ໄດ້ສ້າງເງື່ອນໄຂອຳນວຍໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງປະຫວັດສາດ ທີ່ໄດ້ປະກາດລົບລ້າງລະບອບສັກດີນາ ລ່າເມືອງຂຶ້ນ ແລະ ສະຖາປະນາເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975;

ວັນຍຶດອຳນາດ 23 ສິງຫາ ແມ່ນວັນແຫ່ງການເສີມຂະຫຍາຍມູນເຊື້ອສາມັກຄີຕໍ່ສູ້ພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ທັງເປັນການເຊີດຊູມານະຈິດປະຕິວັດ ແລະ ນ້ຳໃຈຮັກຊາດອັນສູງສົ່ງ ຂອງປະຊາຊົນລາວ ພາຍໃຕ້ການຊີ້ນຳ-ນຳພາອັນສະຫຼາດສ່ອງໃສ່ຂອງພັກປະຊາຊົນປະຕິວັດລາວ; ດັ່ງນັ້ນ, ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອ ກໍຄືນ້ຳໃຈວັນທີ 23 ສິງຫາ ເຂົ້າໃນເງື່ອນໄຂໃໝ່ພວກເຮົາຕ້ອງຕັ້ງໜ້າ, ເຝິກຝົນຫຼໍ່ຫຼອມຕົນເອງ ໄປຕາມທິດຊີ້ນຳໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວຢ່າງເຂັ້ມງວດ ພ້ອມກັນນຳພາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ.



# ຂຽນຄຳລາວໃຫ້ຖືກ

# ດູແສງ

| ຖືກ | ຜິດ |
|---|---|
| ກະສິກອນ | ກະຊິກອນ |
| ຄາຕະກອນ | ຂ້າຕະກອນ |
| ຈິດຕະກອນ | ຈິຕະກອນ |
| ສຳມະນາກອນ | ສະມະນະກອນ |
| ປະຊາກອນ | ປະສາກອນ |
| ປະຕິມາກອນ | ປະທິມາກອນ |
| ລັດຖະກອນ | ລັດທະກອນ |
| ວິສະວະກອນ | ວິສາວະກອນ |
| ວິທະຍາກອນ | ວິທາຍະກອນ |



ສຸຂະພາບກາຍໄຮ້ໂຣກ

# ການທີ່ໃຫ້ລູກກິນນົມພຽງຢ່າງດຽວ

ໂດຍ: ດອກຫຍ້າ



ນົມ ມີປະໂຫຍດຕໍ່ຮ່າງກາຍຂອງເດັກ ເພາະຊ່ວຍເສີມສ້າງກະດູກ ແລະ ຊ່ວຍເພີ່ມຄວາມສູງໃຫ້ກັບເດັກໄດ້ເປັນຢ່າງດີ; ນົມມີຄວາມຈຳເປັນຫຼາຍຕໍ່ເດັກນ້ອຍທີ່ຢູ່ໃນໄວກຳລັງເຕີບໃຫຍ່ ເຖິງວ່າເດັກຈະກິນນົມແມ່, ນົມຜົງ ຫຼື ນົມງົວຕໍາມ ຖ້າປ່ອຍໃຫ້ເດັກກິນແຕ່ນົມ ຫຼື ດື່ມນົມຫຼາຍເກີນໄປໂດຍບໍ່ກິນອາຫານ ເມື່ອເຖິງເກນອາຍຸ ອາດຈະເຮັດໃຫ້ເດັກຂາດສານອາຫານ, ຂາດພະລັງງານ ແລະ ບໍ່ໄດ້ຮັບໃຍອາຫານພຽງພໍ ເຊິ່ງຈະສົ່ງຜົນຮ້າຍຕໍ່ສຸຂະພາບຮ່າງກາຍຂອງເດັກ.

ບັນຫາເດັກນ້ອຍທີ່ບໍ່ຍອມກິນເຂົ້າ ບາງຄອບຄົວອາດຈະໃຫ້ລູກກິນນົມພຽງຢ່າງດຽວ ເພາະຄິດວ່ານົມສາມາດທົດແທນໄດ້ ແຕ່ຄວາມຈິງແລ້ວຮ່າງກາຍຂອງເດັກທີ່ຢູ່ໃນໄລຍະຈະເລີນເຕີບໃຫຍ່ ຈຳເປັນຕ້ອງໄດ້ຮັບສານອາຫານຫຼາຍກວ່ານັ້ນ ດັ່ງນັ້ນ, ຄວນໃຫ້ເດັກນ້ອຍທີ່ອາຍຸຫຼາຍກວ່າ 1 ປີ ກິນເຂົ້າໃຫ້ຄົບສາມຄາບ ໂດຍມີຫານປະເພດຊີ້ນ, ປາ, ຜັກ ແລະ ໃຫ້ກິນນົມມື້ລະ 2-3 ປ່ອງ ຫຼື ຈອກກຳພໍ; ຜົນເສຍທີ່ໃຫ້ເດັກດື່ມນົມພຽງແຕ່ຢ່າງດຽວ

- ຖອກທ້ອງ: ເພາະບໍ່ມີເສັ້ນໃຍຈາກຜັກ ແລະ ໝາກໄມ້ ຈຶ່ງເຮັດໃຫ້ອາຈົມແໜ້ນເປັນກ້ອນ ຫຼື ເປັນເມັດ ຫຼື ບາງຄົນຈະມີອາການຖ່າຍແບບບໍ່ຮູ້ໂຕ ເຮັດໃຫ້ຮູທະວານເປັນບາດແຜ.

- ການຂາດທາດເຫຼັກ: ເຮັດໃຫ້ຊີດ ເຊິ່ງອາດຈະສົ່ງຜົນກະທົບຕໍ່ການສຶກສາດ້ານການພັດທະນາ

- ການຂາດວິຕາມິນຊີ (C) : ເລືອດອອກງ່າຍ, ເຊັ່ນ: ຕາມຫວ່າງແຂ້ວ, ເນື້ອເຍື່ອກະດູກຜິດປົກກະຕິ, ຫິວເຂົ່າ ແລະ ບໍ່ຍອມຍ່າງ.



ສັກສາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❋ 23 ສິງຫາ ປະຫວັດຈາລຶກໄວ້ ຜົນງານໃຫຍ່ປວງຊົນລາວ **ເຕົ້າໂຮມຄວາມສາມັກຄີ** ອາດຫານຕໍ່ຕ້ານທວງສິດອິດສະຫຼະພາບ ຜືນແຜ່ນດິນຈັບລ້ຳຄ່າ **ປົດແອກ** ເພື່ອຫຼຸດພົ້ນ **ອອກຈາກການເປັນຂ້ອຍຂ້າ** ປະຊາສຸກຊື່ນຊອຍ ສາກົນຮູ້ທົ່ວເຖິງ **ຊອບແລ້ວ!**

❋ 12 ສິງຫາ ສະມາຄົມນັກປະພັນລາວ ຖະແຫຼງຂ່າວ ຜົນການເຂົ້າຮ່ວມພິທີມອບຮັບ **ລາງວັນຊີໄຣ (S.E.A. Write Award)** ປີ 2019-2021 ຜ່ານມາ ຍ່ມີສາທຸບ່າພະ ປອໄພວັນ ມາລາວົງ **(ລູກດອນກະເດັນ)** ທີ່ເປັນຜູ້ຂະບະເລີດປະເພດບົດກະວີ ທີ່ມີຊື່ວ່າ **"ຫອມແຜ່ນດິນລາວ"** ແລະ ຍິນດີນຳ ທ່ານ ອຸດົມ ຮອບຄອບ **(ປີຕິທິວາຊົນ)** ເຈົ້າຂອງຜົນງານປະເພດ ເລື່ອງສັ້ນ **"ເຄິ່ງຄ່າ"** ໃນປີ 2020 ແລະ ກ່າວສະແດງຄວາມຊົມເຊີຍ ທ່ານບາງ **ທິບພະພາສອນດວງຈັກ** ທີ່ເປັນຜູ້ຂະບະເລີດ ປະເພດເລື່ອງຍາວ ຫຼື ນະວະນິຍາຍ **"ຮັກບໍ່ມີລັບດອນ"** ປະຈຳປີ 2021 ຜົນສຳເລັດບອກແຈ້ງ ຜົນງານເດັ່ນການຂຽນ ນັກປະພັນຂອງລາວກ້າວໄກສັງຄົມຮູ້ **ຊູເຊີດລາວພຸ່ງພົ້ນ** ທັນສາກົນເຊີງຊ່າ ຊ່ໃຫ້ວົງການນັກຂຽນ **ພັດທະນາຕໍ່ເລື້ອຍ** ແນວນີ້ຕະຫຼອດໄປ **ທ່ານເອີຍ!**

## ອາດ ກະວີລາວ

# ເຂົ້າພັນສາລາເມໄລ

#ຊຽງເອງ

❋ ຫຼາຍຄົນຂັນແຂ່ງເວົ້າ
ໃນພັນສາ
ເອົາຕົວເຂົ້າ
ຫຼຸດຜ່ອນເລີກເກືອກກົ້ວ

ຈາປ່າວຖືເອົາ
ເລີກລາຍາເຫຼົ້າ
ຖືສິນເຄັ່ງຄັດ
ຢາເຫຼົ້າສິ່ງມຶນເມົາ

❋ ປີນີ້ນັດວ່າໄວ້
ໄພຢາຄວັນ
ເໝືອນອະສູນຮ້າຍ
ຮອງຮັບທາດພິດຮ້າຍ

ເລີກຝັກໄຝ່ເມໄລ
ພິດອາຍອົມເປື້ອນ
ທຳລາຍຕັບປອດ
ໝາຍມ້ຽນມອດຊີວັງ

❋ ຈິງຈັງເຮັດໃຫ້ໄດ້
ເດັດດ່ຽວໃຈເປັນກົກ
ອ່ອນແອໂອນເອນເລື້ອຍ
ຢຸດເຊົາພໍສໍ່ານັ້ນ

ສົມດັ່ງໝາຍປອງ ອີຫຼີເດີ!
ບໍ່ອ່ຽງເອນຂວາຊ້າຍ
ຄວາມຫວັງຈະສູນເປົ່າ
ຊີນຳວຸ້ນຕໍ່ໄປ

❋ ເຮັດບໍ່ໄດ້ດັ່ງຂໍ້
ຈະສູນເສຍລາສີ
ມີແຕ່ໃຈປອງປ້ຳ
ຜັດວັນແທນເລື່ອນເລື້ອຍ

ຂານຂອດປະຕິຍານ ມານັ້ນ
ຄ່າຄາມຖູນຄ້ຳ
ກະທຳການແຂງແກ່ນ
ຄືຄວາມຄ້າງຂອດຕັນ

❋ ມັນຈຶ່ງເປັນເລື່ອງເວົ້າ
ໃຈບໍ່ແຂງຂຶງຂັງ
ຄອງເກົ່າແຊງມາຊວ້ານ
ປີນີ້ປີໜ້າເຮັດບໍ່ໄດ້

ແຈ້ງຂ່າວຂານໄຂ
ສິ່ງພະລັງປົກປ້ອງ
ຊູແຮງປະກອບສ່ວນ
ງານນີ້ເລີ່ມທີ່ໃຈ ທ່ານເອີຍ!




## ຊອບຍິ້ມ

# ແອ່ບຕຸ້ງ

### ຊ່າງຖາມ

ສາວກຸ່ມໜຶ່ງລົມກັນ

\+ ເຮີຍ! ກູຖືພາໄດ້ສາມເດືອນແລ້ວໃດ

- ໂອ! ດີລະເດ. ແລ້ວແມ່ນໃຜເປັນພໍ່ຂອງລູກມຶງ

\+ ມຶງຊ່າງຖາມແທ້ ມຶງກິນຖົ່ວດິບຫຼາຍແກ່ນ ແລ້ວມຶງຮູ້ບໍ່ວ່າແກ່ນໃດເຮັດໃຫ້ມຶງຕົດ.

-!!



## ຄະຕິເຕືອນໃຈ

#ດອກຫຍ້າ

ເຂົ້າເປືອກຕ່ຳຕ່າວຊ້ອມ
ຜ່ານຈາກການຂັດສີ
ຊີວິດຄົນທັງຄ້າຍ
ເຝິກຝົນຫຼອມຫຼໍ່ກ້າວ

ແສນທຸກແຖມທະວີ
ຈຶ່ງຄ່ອຍຂາວຄືຍອງຝ້າຍ
ກໍສັບດຽວສະເໝີພາບ
ຈຶ່ງຂາວເຫຼື້ອມສຳເລັດຜົນ




# ເລື່ອມລ້ຳ - ແຕກໂຕນ

"ເລື່ອມລ້ຳ" ແລະ "ແຕກໂຕນ" ເປັນສອງຄຳທີ່ມີຄວາມໝາຍໃກ້ຄຽງກັນ ແຕ່ມີຄວາມຄືແລະຕ່າງກັນດັ່ງນີ້:

"ເລື່ອມລ້ຳ" ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ "ເລື່ອມ" ໝາຍເຖິງ "ກວມ, ປົກເຖິງ, ຫຸ້ມເຖິງ" ແລະ "ລ້ຳ" ໝາຍເຖິງ "ຍິ່ງ, ເກີນ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ເລື່ອມລ້ຳ" ກໍໝາຍເຖິງ "ບໍ່ເທົ່າທຽມກັນ" ເຊັ່ນ

- ສັດສ່ວນຂອງລາຍໄດ້ຂອງຄົນຮັ່ງ ແລະຄົນທຸກນັບມື້ນັບເລື່ອມລ້ຳກັນຫຼາຍຂຶ້ນ.
- ຍ້ອນຄວາມເລື່ອມລ້ຳທາງສັງຄົມຂອງສອງຄອບຄົວນີ້ ຈຶ່ງເປັນເຫດໃຫ້ລູກເຕົ້າຂອງພວກເຂົາບໍ່ສາມາດຈະສ້າງຄອບຄົວນຳກັນໄດ້.
- ສາສະໜາພຸດມີຈຸດປະສົງແນໃສ່ແກ້ໄຂຄວາມເລື່ອມລ້ຳທາງສັງຄົມຂອງອິນເດຍໃນສະໄໝນັ້ນ ເຊິ່ງມີ 4 ວັນນະ ຄື ພາມ ກະສັດ ແພດ ແລະສູດ, ແຕ່ສາສະໜາພຸດບໍ່ໄດ້ຈຳແນກຊົນຊັ້ນວັນນະ ເພື່ອໃຫ້ບໍ່ມີຄວາມເລື່ອມລ້ຳໃນສັງຄົມ.

"ແຕກໂຕນ" ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ "ແຕກ" ທີ່ຖືກຕັດຄຳມາຈາກຄຳວ່າ "ແຕກຕ່າງ" ທີ່ໝາຍເຖິງ "ບໍ່ຄືກັນ" ແລະ "ໂຕນ" ໝາຍເຖິງ "ລົງຈາກບ່ອນສູງຫາຕ່ຳ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ແຕກໂຕນ" ກໍໝາຍເຖິງ "ແຕກຕ່າງກັນຫຼາຍເກີນໄປ" ເຊັ່ນ

- ອາຊຽນກ່າວເນັ້ນວ່າຈະສຸມໃສ່ຫຼຸດຄວາມແຕກໂຕນກັນດ້ານການພັດທະນາລະຫວ່າງປະເທດສະມາຊິກໃຫ້ໜ້ອຍລົງ.
- ລາຍໄດ້ຂອງປະຊາຊົນໃນເຂດຕົວເມືອງແລະເຂດຊົນນະບົດແຕກໂຕນກັນຫລາຍ ເຖິງ 10 ກວ່າເທົ່າ.
- ຖານະຂອງສອງຄອບຄົວນີ້ແຕກໂຕນກັນຫຼາຍ ຄອບຄົວ ກ ມີລົດໃຫຍ່ຕັ້ງ 5 ຄັນ ແຕ່ຄອບຄົວ ຂ ມີແຕ່ລົດຈັກຄັນດຽວ.




**ເພິ່ນວ່າ ປາກ ຕາ ຫູ ເປັນມິດສາມເກີຂອງຫົວໃຈ ແມ່ນວ່າໃຈຄິດດີ ຫຼື ຮ້າຍ ຖ້າສາມມິດນີ້ບໍ່ພ້ອມ ຫົວໃຈ ກໍໝົດຄຸນຄ່າ.**




# ຍີ່ປຸ່ນ ກຽມຫຼຸດພາສີການຜະລິດຊິບ-ແບັດເຕີຣີ EV

ອີງຕາມການລາຍງານຂ່າວເມື່ອທ້າຍອາທິດຜ່ານມາໃຫ້ຮູ້ວ່າ: ທາງການຍີ່ປຸ່ນໄດ້ເປີດເຜີຍບົດລາຍງານໂດຍລະບຸວ່າ: ກຽມວາງແຜນທີ່ຈະຫຼຸດຜ່ອນພາສີສຳລັບແບັດເຕີຣີລົດໄຟຟ້າ (EV) ແລະ ຊິບ ເຊມິຄອນດັກເຕີ (Semiconductor chip) ທີ່ຜະລິດໃນປະເທດຕັ້ງແຕ່ເດືອນເມສາ 2024 ເພື່ອເພີ່ມສະຖຽນລະພາບທາງດ້ານເສດຖະກິດ.



ບົດລາຍງານລະບຸວ່າ: ແຜນການຫຼຸດຜ່ອນພາສີຈະມີຂຶ້ນຕາມຫຼັງນະໂຍບາຍໃນຮູບແບບອຸດສາຫະກຳທີ່ຄ້າຍຄືກັນໃນອາເມຣິກາ ແລະ ສະຫະພາບເອີຣົບ ເຊິ່ງເນັ້ນເຖິງການສົ່ງເສີມໃຫ້ບໍລິສັດຕ່າງໆຍ້າຍຖານການຜະລິດຈາກຈີນກັບໄປສູ່ປະເທດບ້ານເກີດ ແລະ ຈະອຳນວຍຄວາມສະດວກໃນການປ່ຽນຜ່ານດ້ານພະລັງງານຂອງປະເທດເຊັ່ນດຽວກັນ. ສຳລັບການແກ້ໄຂພາສີອາກອນໃນສົກປີງົບປະມານ 2024 ຂອງລັດຖະບານຍີ່ປຸ່ນ ກະຊວງເສດຖະກິດ, ການຄ້າ ແລະ ອຸດສາຫະກຳ ຈະສະເໜີແຜນຫຼຸດຜ່ອນພາສີສຳລັບບໍລິສັດທີ່ຜະລິດສິນຄ້າສຳຄັນທາງຍຸດທະສາດໃນຍີ່ປຸ່ນ.

ບົດລາຍງານລະບຸຕື່ມວ່າ: ແຜນການດັ່ງກ່າວ ຄ້າຍຄືກັບກົດໝາຍການປັບຫຼຸດເງິນເຟີ້ຂອງອາເມຣິກາ ຈະຫຼຸດພາສີນິຕິບຸກຄົນຕາມຜົນຜະລິດແບັດເຕີຣີ ແລະ ຊິບ ໂດຍກະຊວງເສດຖະກິດ, ການຄ້າ ແລະ ອຸດສາຫະກຳຂອງຍີ່ປຸ່ນ ຈະຮ່າງກົດໝາຍສິນຄ້າທີ່ເຂົ້າເກນພາຍໃນທ້າຍປີນີ້.

ລັດຖະບານຍີ່ປຸ່ນຈະປັບແກ້ພາສີອາກອນທຸກລະດູໃບໄມ້ປົ່ງ ຫຼັງຈາກທີ່ລັດຖະບານປະສົມມີຄວາມເຫັນກົງກັນກ່ຽວກັບການຮ່າງກົດໝາຍດັ່ງກ່າວ ແລະ ກຳນົດແນວທາງໂດຍລວມໃນເດືອນທັນວາ.

ເພື່ອຮັກສາຄວາມປອດໄພຂອງຕ່ອງໂສ້ການສະໜອງສຳລັບສິນຄ້າທາງຍຸດທະສາດ ຍີ່ປຸ່ນຍັງໄດ້ສະເໜີເງິນສະໜັບສະໜູນຫຼາຍພັນລ້ານໂດລາສຳລັບຜູ້ຜະລິດຊິບ ເຊັ່ນ: ບໍລິສັດໄຕ້ຫວັນ ເຊມິຄອນດັກເຕີ ເມນູເຟກເຈີຣິງ (Manufacturing) ແລະ ໄມຄຣອນ (Micron) ເຕັກໂນໂລຊີ ເພື່ອສ້າງໂຮງງານໃນຍີ່ປຸ່ນ ແລະ ປະກາດໃຊ້ກົດໝາຍສົ່ງເສີມສະຖຽນລະພາບທາງດ້ານເສດຖະກິດໃນປີຜ່ານມາ.

# ນິວຊີແລນ ຍົກເລີກຂໍ້ກຳນົດຄວບຄຸມພະຍາດໂຄວິດ-19

ຕາມການລາຍງານໃນວັນທີ 15 ສິງຫາຜ່ານມາ ໃຫ້ຮູ້ວ່າ: ລັດຖະບານນິວຊີແລນ ໄດ້ປະກາດຍົກເລີກຂໍ້ກຳນົດທາງດ້ານສາທາລະນະສຸກທີ່ຍັງເຫຼືອສຳລັບປ້ອງກັນພະຍາດໂຄວິດ-19 ໂດຍມີຜົນຕັ້ງແຕ່ວັນທີ 15 ສິງຫາເປັນຕົ້ນໄປ.

ທ່ານ ອາຢີຊາ ເວີຣັນ ລັດຖະມົນຕີວ່າການກະຊວງສາທາລະນະສຸກຂອງນິວຊີແລນ ລະບຸວ່າ: ອັດຕາຄົນເຈັບພະຍາດໂຄວິດ-19 ເຂົ້າປິ່ນປົວໃນໂຮງໝໍມີທ່າອ່ຽງຫຼຸດລົງຕັ້ງແຕ່ຕົ້ນເດືອນມິຖຸນາ ຂະນະທີ່ມີການຄາດຄະເນວ່າ ຈຳນວນຄົນເຈັບຕໍ່ອາທິດຍັງບໍ່ຄົງທີ່. ທ່ານ ເວີຣັນ ລະບຸວ່າ: ຈຳນວນຄົນເຈັບພະຍາດໂຄວິດ-19 ທີ່ມີການລາຍງານໃນເດືອນກໍລະກົດຜ່ານມາຢູ່ໃນລະດັບຕ່ຳທີ່ສຸດນັບຕັ້ງແຕ່ເດືອນກຸມພາ 2022 ໂດຍການຕິດເຊື້ອພະຍາດໂຄວິດ-19 ຄິດເປັນ 2,2% ຂອງການເຂົ້າປິ່ນປົວໃນໂຮງໝໍເມື່ອນັບເຖິງວັນທີ 14 ສິງຫາທີ່ຜ່ານມາ ແລະ ປັດຈຸບັນ, ນິວຊີແລນ ມີທ່າອ່ຽງຜ່ານໄລຍະໄຂ້ຫວັດໃຫຍ່ລະດູໜາວລະບາດສູງສຸດແລ້ວ.

ນອກຈາກນັ້ນ, ລະດັບພູມຄຸ້ມກັນຂອງປະຊາກອນນິວຊີແລນ ຢູ່ໃນຈຸດທີ່ສາມາດຍົກເລີກຂໍ້ກຳນົດປ້ອງກັນພະຍາດໂຄວິດ-19 ທີ່ເຫຼືອໄດ້ຢ່າງປອດໄພ ໂດຍແນວທາງປະຕິບັດຕໍ່ພະຍາດໂຄວິດ-19 ຂອງນິວຊີແລນປ່ຽນຈາກການຮັບມືສຸກເສີນສູ່ການຈັດການໄລຍະຍາວຢ່າງຍືນຍົງ.

# ຫວຽດນາມ ກຳນົດວິທະຍາສາດ ເຕັກໂນໂລຊີ ແລະ ການສຶກສາບຳລຸງສ້າງ ເປັນນະໂຍບາຍແຖວໜ້າ

ມີການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ທີ່ສຳນັກງານປະທານປະເທດຫວຽດນາມ, ທ່ານ ຫວໍ ວັນ ເທືອງ ປະທານປະເທດຫວຽດນາມໄດ້ພົບປະກັບນັກວິທະຍາສາດສາກົນ ແລະ ຫວຽດນາມ 56 ທ່ານ, ໂດຍຕາງໜ້າໃຫ້ນັກວິທະຍາສາດ 158 ທ່ານ ຈາກ 28 ປະເທດ ແລະ ເຂດແຄ້ວນໃນທົ່ວປະເທດທີ່ເດີນທາງມາຫວຽດນາມ ເພື່ອເຂົ້າຮ່ວມກອງປະຊຸມວິທະຍາສາດສາກົນ "ປ່ອງຢ້ຽມສັງເກດຈັກກະວານ" ທີ່ຈັດຂຶ້ນໃນວັນທີ 7-12 ສິງຫາຜ່ານມາ ຢູ່ນະຄອນກຸຍເຍິນ ແຂວງບິ່ງດິ້ງ.



ທ່ານ ຫວໍ ວັນ ເທືອງ ໄດ້ຢ້ຳຄືນບັນດາເປົ້າໝາຍແຫ່ງການພັດທະນາຂອງຫວຽດນາມວ່າ: ຮອດປີ 2045 ຫວຽດນາມຈະກາຍເປັນປະເທດມີລາຍຮັບສູງ. ພັກ-ລັດຫວຽດນາມ ຍາມໃດກໍກຳນົດວິທະຍາສາດ ເຕັກໂນໂລຊີ ແລະ ການສຶກສາບຳລຸງສ້າງແມ່ນລັດຖະນະໂຍບາຍແຖວໜ້າ ແລະ ຍາມໃດກໍເອົາໃຈໃສ່ພັດທະນາວິທະຍາສາດພື້ນຖານ, ປະຖົມປັດໄຈໃຫ້ວິທະຍາສາດໝູນໃຊ້ ແລະ ພັດທະນາແບບຍືນຍົງ. ທ່ານຢັ້ງຢືນວ່າ: ຜົນສຳເລັດຂອງຫວຽດນາມ ແມ່ນມີການປະກອບສ່ວນອັນໃຫຍ່ຫຼວງຂອງບັນດານັກປັນຍາຊົນຊາວຫວຽດນາມທີ່ອາໄສຢູ່ຕ່າງປະເທດ, ເພື່ອນມິດສາກົນ ພ້ອມທັງປາຖະໜາຢາກໄດ້ຮັບການສະໜັບສະໜູນຈາກບັນດານັກວິທະຍາສາດທັງຢູ່ພາຍໃນ ແລະ ຕ່າງປະເທດ. ຫວັງວ່າໄລຍະຈະມາເຖິງ, ຫວຽດນາມຈະສືບຕໍ່ໄດ້ຮັບການຮ່ວມມື, ສະໜັບສະໜູນຂອງບັນດານັກວິທະຍາສາດສາກົນ, ບັນດານັກວິທະຍາສາດຫວຽດນາມທີ່ອາໄສຢູ່ຕ່າງປະເທດ. ຜ່ານການຮ່ວມມື ແລະ ເຊື່ອມຕໍ່, ພົວພັນແລກປ່ຽນຄວາມອາດສາມາດເພີ່ມພູນຄູນສ້າງ, ຊຸກຍູ້, ສ້າງແຮງບັນດານໃຈ, ໃນການຄົ້ນຄວ້າວິທະຍາສາດເພື່ອຖ່າຍທອດໃຫ້ບັນດານັກວິທະຍາສາດໜຸ່ມຂອງຫວຽດນາມ ຢູ່ພາຍໃນ ແລະ ຕ່າງປະເທດ. ຂ້າພະເຈົ້າຂໍສະແດງຄວາມຂອບໃຈບັນດານັກວິທະຍາສາດ ທີ່ໄດ້ແນະນຳຫຼາຍນະໂຍບາຍ, ບັນດາບົດຮຽນລ້ຳຄ່າກ່ຽວກັບການພັດທະນາ ແລະ ພັດທະນາແບບຍືນຍົງ, ເພື່ອໃຫ້ວິທະຍາສາດ, ການສຶກສາປະກອບສ່ວນຫຼາຍທີ່ສຸດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຫວຽດນາມ.




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

ກ່ຽວກັບ ພວກທີ່ອົດທົນຕໍ່ຄວາມທຸກຍາກລຳບາກບໍ່ໄດ້, ອົດທົນຕໍ່ລະບຽບວິໄນອັນເຄັ່ງຄັດ ບໍ່ໄດ້ ແລ້ວກໍລາອອກຈາກພັກນັ້ນ ພັກເຮົາກໍຍິນດີໃຫ້ເຂົາເຈົ້າອອກ. ພັກເຮົາຂໍນຳເຂົາເຈົ້າແຕ່ສິ່ງດຽວ ຄື ຂໍໃຫ້ເຂົາເຈົ້າປະຕິຍານວ່າ: ຈະບໍ່ເປີດເຜີຍຄວາມລັບຂອງພັກ, ບໍ່ຕ້ານຢັນກັບພັກ ແລະ ບໍ່ມ້າງເພພັກ, ຖ້າເຮັດໄດ້ແນວນັ້ນ ພັກເຮົາກໍຄົງຮັກສາຄວາມຮັກແພງສະໜິດສະໜົມກັບເຂົາເຈົ້າຢູ່. ພະນັກງານ ແລະ ສະມາຊິກຂອງພັກ ກໍແມ່ນຄົນຄືດຽວກັບຄົນອື່ນ, ຜູ້ໃດກໍຍ່ອມມີແນວຄິດດີ ແລະ ແນວຄິດຊົ່ວເປັນທຳມະດາ, ແຕ່ວ່າໃນເມື່ອໄດ້ຮຽນຮູ້, ໄດ້ເຂົ້າໃຈ, ໄດ້ສະໝັກເຂົ້າພັກ ເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ຂອງຊາດ, ໄດ້ເປັນນັກປະຕິວັດດັ່ງນັ້ນແລ້ວ, ທຸກຄົນກໍຕ້ອງອົດທົນຂະຫຍາຍແນວຄິດທີ່ດີ ແລະ ແກ້ໄຂດັດແປງແນວຄິດຊົ່ວ. ເພາະວ່າແນວຄິດຊົ່ວຂອງຜູ້ໃດ ມັນກໍມັກນຳຄວາມເສຍຫາຍໃຫ້ແກ່ຕົວຜູ້ນັ້ນເອງ, ສ່ວນຄວາມຄິດຊົ່ວຂອງສະມາຊິກຂອງພັກ ແລະ ຂອງພະນັກງານນັ້ນ ມັນຈະນຳຄວາມເສຍຫາຍມາໃຫ້ພັກ ແລະ ໃຫ້ປະຊາຊົນອີກດ້ວຍ.

**5. ບັນດາຂໍ້ບົກພ່ອງ ແລະ ຜິດພາດ:**

ພາຍໃນພັກຂອງເຮົາ ກໍຍັງມີຄົນຜູ້ບໍ່ທັນຮຽນຮູ້ ແລະ ບໍ່ທັນເຮັດໄດ້ໃນຄວາມທີ່ວ່າ: ເສຍສະຫຼະປະໂຫຍດສ່ວນຕົວເພື່ອສ່ວນລວມ ດັ່ງນັ້ນ, ຄົນພວກນັ້ນ ຈຶ່ງມັກມີລັດທິເອກະຊົນ. ລັດທິເອກະຊົນເປັນຄືແນວແມ່ພະຍາດຊະນິດໜຶ່ງ ທີ່ຮ້າຍກາດທີ່ສຸດ, ມັນພາໃຫ້ເກີດພະຍາດຫຼາຍຊະນິດ ທີ່ເປັນອັນຕະລາຍທີ່ສຸດ ຄືດັ່ງຈະຊີ້ແຈງຢູ່ຂ້າງລຸ່ມນີ້:

ອ່ານຕໍ່ສະບັບໜ້າ...

# ປະມວນພາບບັນຍາກາດ ກອງປະຊຸມໄອປາ ຄັ້ງທີ 44 ທີ່ ສ.ອິນໂດເນເຊຍ





























**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ;
ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ